ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---------------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2751/ຮສສ
ນະຄອນຫຼວງວຽງຈັນ, ວັນທີ 24 ກໍລະກົດ 2015

# ຄໍາແນະນໍາ
# ກ່ຽວກັບການຈັດຕັ້ງປະຕິບັດ
# ກົດໝາຍວ່າດ້ວຍການປະກັນສັງຄົມ
# (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 04 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ອີງຕາມ ຜົນການຄົ້ນຄ້ວາ, ປັບປຸງ ແລະ ຮຽບຮຽງຄືນໃໝ່ ກ່ຽວກັບຄໍາແນະນໍາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະກັນສັງຄົມ ເພື່ອໃຫ້ມີຄວາມຊັດເຈນ, ສອດຄ່ອງ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີວ່າການ ອອກຄໍາແນະນໍາ:

## I. ບົດບັນຍັດທົ່ວໄປ

### 1. ຈຸດປະສົງ

ຄໍາແນະນໍາສະບັບນີ້ ອະທິບາຍບາງເນື້ອໃນ ກ່ຽວກັບເງື່ອນໄຂ, ວິທີການຄິດໄລ່ການອຸດໜູນປະກັນສັງຄົມປະເພດຕ່າງໆ, ການຖອກເງິນສົມທົບຂອງລັດຖະບານ, ພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ, ຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ, ການສະສົມເງິນສົມທົບ ແລະ ໄລຍະປະກັນຕົນ, ການສະເໜີຮັບການອຸດໜູນປະກັນສັງຄົມ ເພື່ອໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງ, ຊັດເຈນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

### 2. ການແນະນໍາບາງເນື້ອໃນຂອງກົດໝາຍວ່າດ້ວຍການປະກັນສັງຄົມ

ກົດໝາຍ ວ່າດ້ວຍການປະກັນສັງຄົມ ປະກອບມີ 9 ພາກ, 16 ໝວດ ແລະ 94 ມາດຕາ ຊຶ່ງໃນນີ້ ໄດ້ແນະນໍາບາງເນື້ອໃນຂອງບາງມາດຕາ ໃນພາກທີ II ລະບອບການອຸດໜູນປະກັນສັງຄົມ, ພາກທີ III ກອງທຶນ ແລະ ສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ແລະ ພາກທີ IV ການຮັບອຸດໜູນປະກັນສັງຄົມ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບເນື້ອໃນ, ວິທີ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດ ຊຶ່ງມີ ດັ່ງນີ້:

### 2.1. ພາກທີ II ລະບອບການອຸດໜູນປະກັນສັງຄົມ

ການແນະນໍາກ່ຽວກັບລະບອບການອຸດໜູນປະກັນສັງຄົມ ມີ ດັ່ງນີ້:

1). ອະທິບາຍເນື້ອໃນຂໍ້ຄວາມທີ່ຍັງບໍ່ທັນຊັດເຈນ ເຊັ່ນ: ການກຳນົດກຸ່ມເປົ້າໝາຍທີ່ຕ້ອງເຂົ້າປະກັນສັງຄົມແບບບັງຄັບ ແລະ ແບບສະໝັກໃຈ, ການບໍລິການປິ່ນປົວສຸຂະພາບຢູ່ໂຮງໝໍ, ການເຈັບເປັນທີ່ມີເຫດຜົນທາງການແພດທີ່ໃຊ້ການບໍລິການປິ່ນປົວສຸຂະພາບຢູ່ຕ່າງປະເທດ, ການໂອນເງິນອຸດໜູນປິ່ນປົວສຸຂະພາບ, ການຈັດປະເພດ ແລະ ລະດັບການເສຍອົງຄະ ໂດຍການຢັ້ງຢືນຂອງຄະນະຮັບຜິດຊອບຕີລາຄາແບ່ງຂັ້ນຂາດສະມັດຕະພາບແຮງງານ-ພິການ ຫຼື ເສຍອົງຄະ, ຄະແນນບໍານານ ຄູນ ເງິນເດືອນ ຫຼື ຄ່າແຮງງານສະເລ່ຍ ຄູນ ດັດສະນີ, ເງິນອຸດໜູນຄອບຄົວຂອງຜູ້ປະກັນຕົນທີ່ໄດ້ເສຍຊີວິດ ທີ່ມີປີການ 15 ປີ ລົງມາ, ເງິນອຸດໜູນ ພໍ່ ຫຼື ແມ່ ທີ່ລູກທັງໝົດໄດ້ເສຍຊີວິດ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ເພື່ອປະເທດຊາດ.

2). ວິທີການຄິດໄລ່ເງິນອຸດໜູນປະກັນສັງຄົມ ເຊັ່ນ: ການອຸດໜູນປິ່ນປົວສຸຂະພາບ, ການອອກລູກ ຫຼື ຫຼຸລູກ, ອຸປະຕິເຫດແຮງງານ, ພະຍາດອາຊີບ ຫຼື ອຸປະຕິເຫດອື່ນ, ປ່ວຍການ, ເສຍອົງຄະ, ບໍານານ, ອຸດໜູນເທື່ອດຽວ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ວ່າງງານ.

**2.2. ພາກທີ III ກອງທຶນ ແລະ ສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ**

ການແນະນຳກ່ຽວກັບວິທີ ແລະ ຂັ້ນຕອນການຖອກເງິນສົມທົບຂອງລັດຖະບານ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ, ການສະສົມເງິນສົມທົບຂອງກອງທຶນປະກັນສັງຄົມແຫ່ງຊາດ.

**2.3. ພາກທີ IV ການຮັບອຸດໜູນປະກັນສັງຄົມ**

ການແນະນຳກ່ຽວກັບການຮັບອຸດໜູນປະກັນສັງຄົມ ໄດ້ກຳນົດວິທີ ແລະ ຂັ້ນຕອນໃນການຂຶ້ນທະບຽນ, ການແຈ້ງຂໍ້ມູນຂອງຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ, ການຮ້ອງຂໍ ແລະ ການພິຈາລະນາການຮັບອຸດໜູນປະກັນສັງຄົມໄລຍະຍາວ ແລະ ໄລຍະສັ້ນ.

2.4. ສຳລັບພາກທີ I ບົດບັນຍັດທົ່ວໄປ, ພາກທີ V ຂໍ້ຫ້າມ, ພາກທີ VI ການແກ້ໄຂຂໍ້ຂັດແຍ່ງ, ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ, ພາກທີ IX ບົດບັນຍັດສຸດທ້າຍ ໄດ້ກຳນົດເນື້ອໃນທີ່ຊັດເຈນແລ້ວ ຈຶ່ງບໍ່ໄດ້ແນະນຳຕື່ມອີກ.

## II. ລະບອບການອຸດໜູນປະກັນສັງຄົມ

**1. ມາດຕາ 10 ເປົ້າໝາຍຮັບການອຸດໜູນປະກັນສັງຄົມ**

ເປົ້າໝາຍທີ່ຕ້ອງເຂົ້າປະກັນສັງຄົມແບບບັງຄັບ ແລະ ແບບສະໝັກໃຈ ເພື່ອຮັບການອຸດໜູນປະກັນສັງຄົມ ມີດັ່ງນີ້:

**1.1. ກຸ່ມເປົ້າໝາຍແບບບັງຄັບ**

- ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບໍານານ, ຜູ້ເສຍອົງຄະ ແລະ ສະມາຊິກຄອບຄົວຂອງພວກກ່ຽວ;
- ຫົວໜ່ວຍແຮງງານຕ່າງໆໃນຂົງເຂດທຸລະກິດ, ການຜະລິດ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດ-ສັງຄົມ ເປັນຕົ້ນ ລັດວິສາຫະກິດ, ວິສາຫະກິດເອກະຊົນ, ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ສະຖາບັນການສຶກສາພາກເອກະຊົນ, ໂຮງໝໍເອກະຊົນ, ໂຮງຈັກ, ໂຮງງານ, ໂຮງແຮມ, ຮ້ານຊັບພະສິນຄ້າ, ຮ້ານອາຫານ, ຟາມກະສິກຳ, ໂຄງການລົງທຶນດ້ານຕ່າງໆ ແລະ ອື່ນໆ;
- ຜູ້ອອກແຮງງານ ໃນຫົວໜ່ວຍແຮງງານໃດໜຶ່ງ ທີ່ມີເງິນເດືອນ ຫຼື ຄ່າແຮງງານ;
- ພະນັກງານຄົນລາວ ທີ່ເຮັດວຽກຢູ່ສະຖານທູດ, ກົງສູນ, ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ສັງກັດລັດຖະບານ ທີ່ປະຈໍາຢູ່ ສປປ ລາວ;
- ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກໃນຫົວໜ່ວຍແຮງງານໃດໜຶ່ງ ຊຶ່ງມີເງິນເດືອນ ຫຼື ຄ່າແຮງງານ.

ກຸ່ມເປົ້າໝາຍດັ່ງກ່າວຂ້າງເທິງນີ້ ຕ້ອງໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ເປັນລາຍເດືອນຕາມລະບຽບການ ເພື່ອຮັບການອຸດໜູນປະກັນສັງຄົມທຸກປະເພດ ຕາມທີ່ໄດ້ກຳນົດໄວ້.

ສໍາລັບ ຜົວ ຫຼື ເມັຍ ແລະ ລູກ ຂອງຜູ້ປະກັນຕົນ ຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ, ເສຍຊີວິດ ແລະ ການອຸດໜູນສະມາຊິກຄອບຄົວ, ພໍ່ ຫຼື ແມ່ ຂອງຜູ້ປະກັນຕົນ ຈະໄດ້ຮັບການອຸດໜູນສະມາຊິກຄອບຄົວ.

**1.2. ກຸ່ມເປົ້າໝາຍແບບສະໝັກໃຈ**

ຜູ້ປະກອບອາຊີບສ່ວນບຸກຄົນ ເປັນຕົ້ນ ຊາວກະສິກອນ, ຊາວຄ້າຂາຍ, ຜູ້ເຮັດການບໍລິການ ແລະ ອື່ນໆ ລວມທັງຜູ້ສະໝັກໃຈ ຈະໄດ້ຮັບການອຸດໜູນປະກັນສັງຄົມ ເປັນຕົ້ນ ການອຸດໜູນປິ່ນປົວສຸຂະພາບ, ການອອກລູກ ຫຼື ຫຼຸລູກ, ປ່ວຍການ, ເສຍອົງຄະ, ບໍານານ, ເສຍຊີວິດ ແລະ ສະມາຊິກຄອບຄົວ.

**2. ປະເພດການອຸດໜູນປະກັນສັງຄົມ**

**2.1. ມາດຕາ 11 ການອຸດໜູນປິ່ນປົວສຸຂະພາບ**

ການອຸດໜູນປິ່ນປົວສຸຂະພາບ ແມ່ນ ການສະໜອງເງິນອຸດໜູນ ເພື່ອປິ່ນປົວສຸຂະພາບໃຫ້ຜູ້ປະກັນຕົນ ລວມທັງລູກ, ຜົວ ຫຼື ເມັຍ ຂອງຜູ້ກ່ຽວ.

**2.1.1. ມາດຕາ 12 ເງື່ອນໄຂຮັບການອຸດໜູນປິ່ນປົວສຸຂະພາບ**

ຜູ້ຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ຕ້ອງມີເງື່ອນໄຂ ດັ່ງນີ້:

1). ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 1 ເດືອນ ຂຶ້ນໄປ ໃນໄລຍະ 6 ເດືອນສຸດທ້າຍ ສໍາລັບການເກີດອຸປະຕິເຫດແຮງງານ, ພະຍາດອາຊີບ ແລະ ການອອກລູກ ຫຼື ຫຼຸລູກ;

2). ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 3 ເດືອນຂຶ້ນໄປ ໃນໄລຍະ 6 ເດືອນສຸດທ້າຍ ສໍາລັບການເປັນພະຍາດທົ່ວໄປ ແລະ ອຸປະຕິເຫດ ທີ່ບໍ່ແມ່ນອຸປະຕິເຫດແຮງງານ.

ຜົວ ຫຼື ເມັຍ ຂອງຜູ້ປະກັນຕົນ ແລະ ລູກຂອງຜູ້ກ່ຽວທີ່ມີອາຍຸບໍ່ເກີນ 18 ປີ ກໍຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ. ສໍາລັບ ລູກທີ່ມີອາຍຸເກີນ 18 ປີ ຫາ 23 ປີ ທີ່ຍັງສຶກສາຮໍ່າຮຽນ ແລະ ບໍ່ທັນໄດ້ແຕ່ງດອງ ທີ່ຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ຕ້ອງໄດ້ແຈ້ງບັດນັກສຶກສາ ຫຼື ໃບຢັ້ງຢືນການສຶກສາຂອງຕົນ ເປັນແຕ່ລະສົກປີການສຶກສາ.

ລູກທີ່ ພໍ່ ແລະ ແມ່ ລ້ວນແຕ່ເປັນຜູ້ປະກັນຕົນທີ່ແຈ້ງຂໍ້ມູນນໍາ ພໍ່ ແລະ ແມ່ ຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບນໍາ ພໍ່ ຫຼື ແມ່ ຝ່າຍດຽວ.

ໃນກໍລະນີ ຜູ້ປະກັນຕົນ ຫາກເສຍຊີວິດ ຫຼື ຢຸດຈ່າຍເງິນສົມທົບນັ້ນ ຜົວ ຫຼື ເມັຍ ແລະ ລູກ ຂອງຜູ້ກ່ຽວຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ໃນໄລຍະ 3 ເດືອນຖັດມາ ນັບແຕ່ຜູ້ປະກັນຕົນໄດ້ເສຍຊີວິດ ຫຼື ຢຸດຈ່າຍເງິນສົມທົບເປັນຕົ້ນໄປ.

**2.1.2. ມາດຕາ 13 ການບໍລິການປິ່ນປົວສຸຂະພາບ**

ຜູ້ປະກັນຕົນ, ຜົວ ຫຼື ເມັຍ ແລະ ລູກຂອງຜູ້ກ່ຽວ ຈະໄດ້ຮັບການບໍລິການປິ່ນປົວສຸຂະພາບຢູ່ໂຮງໝໍ ຕາມລະບົບບໍລິການປິ່ນປົວ ທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການປິ່ນປົວ.

ເພື່ອເຮັດໃຫ້ການບໍລິການປິ່ນປົວສຸຂະພາບ ມີຄວາມສະດວກ ແລະ ຊັດເຈນ ຈຶ່ງແນະນໍາເພີ່ມເຕີມ ດັ່ງນີ້:

1. ການເລືອກໃຊ້ ແລະ ການເຊື່ອມໂຍງລະຫວ່າງໂຮງໝໍດ້ວຍກັນ

ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ຕ້ອງໄດ້ເລືອກໂຮງໝໍໃດໜຶ່ງເປັນຫຼັກ ເພື່ອຄວາມສະດວກໃນການໃຊ້ບໍລິການປິ່ນປົວສຸຂະພາບ ໃນເວລາເຈັບເປັນ.

ໃນກໍລະນີ ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ທີ່ເຈັບເປັນ ຍ້ອນປະສົບອຸປະຕິເຫດ ຫຼື ເປັນພະຍາດໃດໜຶ່ງແບບກະທັນຫັນ ທີ່ຕ້ອງໄດ້ເຂົ້າປິ່ນປົວ ກໍສາມາດໃຊ້ບໍລິການປິ່ນປົວສຸຂະພາບຊົ່ວຄາວຢູ່ໂຮງໝໍໃດໜຶ່ງ ທີ່ເປັນຄູ່ສັນຍາ ແລະ ບໍ່ເປັນຄູ່ສັນຍາ ຄື:

1). ຖ້າຫາກເປັນໂຮງໝໍ ທີ່ເປັນຄູ່ສັນຍາ ຜູ້ປະກັນຕົນ ສາມາດແຈ້ງບັດປະກັນສັງຄົມ ຫຼື ບັດປະກັນສຸຂະພາບ ເພື່ອເຂົ້າຮັບການປິ່ນປົວ;

2). ຖ້າຫາກເປັນໂຮງໝໍ ທີ່ບໍ່ເປັນຄູ່ສັນຍາ ຜູ້ປະກັນຕົນຕ້ອງໄດ້ແຈ້ງໃຫ້ໂຮງໝໍທີ່ຕົນໄດ້ເລືອກໄວ້, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ຫຼື ສູນບໍລິການກອງທຶນປະກັນສັງຄົມຂັ້ນທ້ອງຖິ່ນ ເພື່ອຮັບຊາບ ພາຍໃນກໍານົດ 72 ຊົ່ວໂມງ.

ຜູ້ປະກັນຕົນທີ່ເຈັບເປັນກະທັນຫັນ ທີ່ໄດ້ໃຊ້ບໍລິການຕາມຂໍ້ 1 ແລະ 2 ຂ້າງເທິງນີ້ ຫາກມີອາການດີຂຶ້ນ ກໍຕ້ອງອອກຈາກໂຮງໝໍທີ່ກ່ຽວຂ້ອງ ເພື່ອໄປໃຊ້ບໍລິການປິ່ນປົວສຸຂະພາບຢູ່ໂຮງໝໍ ທີ່ຕົນເລືອກໄວ້ຕໍ່ໄປ.

3). ການທົດແທນຄ່າປິ່ນປົວສຸຂະພາບໃຫ້ປະຕິບັດຕາມ ກໍລະນີ ຄື:

- ກໍລະນີ ຂໍ້ 1 ຂ້າງເທິງນີ້ ແມ່ນໂຮງໝໍ ທີ່ເປັນຄູ່ສັນຍາ ແລະ ໂຮງໝໍ ທີ່ໄດ້ເລືອກໄວ້ເປັນຜູ້ຊຳລະຄ່າປິ່ນປົວສຸຂະພາບດ້ວຍກັນ;

- ກໍລະນີ ຂໍ້ 2 ຂ້າງເທິງນີ້ ຕ້ອງໄດ້ປະກອບໃບບິນຮັບເງິນ ແລະ ເອກະສານຢັ້ງຢືນທາງການແພດ ເພື່ອສະເໜີໂຮງໝໍທີ່ໄດ້ເລືອກໄວ້ພິຈາລະນາທົດແທນຄ່າປິ່ນປົວສຸຂະພາບຄືນໃຫ້ຜູ້ກ່ຽວ ຕາມຄວາມເໝາະສົມພາຍໃນກຳນົດ 1 ເດືອນ.

2. ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ທີ່ນອນປິ່ນປົວສຸຂະພາບ ຢູ່ໂຮງໝໍ ເກີນ 6 ເດືອນ ຂຶ້ນໄປນັ້ນ ໂຮງໝໍ ແລະ ຜູ້ກ່ຽວຈະໄດ້ຈ່າຍຄ່າບໍລິການສຸຂະພາບ ດັ່ງນີ້:

1). ແຕ່ 7 ຫາ 12 ເດືອນ, ໂຮງໝໍຈ່າຍ ເທົ່າກັບ 70% ແລະ ຜູ້ກ່ຽວຈ່າຍ ເທົ່າກັບ 30% ຂອງຄ່າປິ່ນປົວ;

2). ເກີນ 12 ເດືອນ ຂຶ້ນໄປ, ໂຮງໝໍຈ່າຍ ເທົ່າກັບ 50% ແລະ ຜູ້ກ່ຽວຈ່າຍ ເທົ່າກັບ 50% ຂອງຄ່າປິ່ນປົວ.

ໃນກໍລະນີ ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວທີ່ເກີດສິດ ຫາກມີຄວາມຕ້ອງການນຳໃຊ້ຢາທີ່ບໍ່ນອນຢູ່ໃນບັນຊີຢາຂອງໂຮງໝໍ ແລະ ຫ້ອງນອນພິເສດນັ້ນ ໃຫ້ຜູ້ກ່ຽວຮັບຜິດຊອບຈ່າຍຄ່າພົດດັ່ງກ່າວດ້ວຍຕົນເອງ.

3. ການຍົກເວັ້ນຄ່າໃຊ້ຈ່າຍຕາມອັດຕາເງິນມອບເໝົາ ສຳລັບການບໍລິການປິ່ນປົວສຸຂະພາບ

ເພື່ອເຮັດໃຫ້ກອງທຶນປະກັນສັງຄົມແຫ່ງຊາດ ສາມາດສະສົມທຶນ ແລະ ມີຄວາມຍືນຍົງຈະໄດ້ຍົກເວັ້ນຄ່າໃຊ້ຈ່າຍສຳລັບລາຍການປິ່ນປົວສຸຂະພາບ ຕາມກໍລະນີ ດັ່ງນີ້:

1). ການປ້ອງກັນ ແລະ ປິ່ນປົວພະຍາດ ທີ່ມີໂຄງການຂອງລັດຖະບານຮັບຜິດຊອບແລ້ວ ເປັນຕົ້ນ ພະຍາດວັນນະໂລກປອດ, ພະຍາດຫຼອງ ແລະ ອື່ນໆ;

2). ການຜ່າຕັດຫົວໃຈ;

3). ການຟອກເລືອດ ໃນກໍລະນີ ໄຂ່ຫຼັງຊຸດໂຊມແບບຊ້ຳເຮື້ອ ເກີນຫ້າຄັ້ງ;

4). ພະຍາດທາລາເຊມີ ເຊັ່ນ: ການໃຫ້ເລືອດ, ຕັດປ້າງ, ການຂັບຖ່າຍທາດເຫຼັກ;

5). ການປິ່ນປົວດ້ວຍລັງສີບຳບັດ ໃນກໍລະນີເປັນພະຍາດມະເຮັງ;

6). ການຕັດແວ່ນຕາ ຫຼື ເລນທຽມ, ຍົກເວັ້ນການເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;

7). ການໃສ່ແຂ້ວທຽມ ຫຼື ດັດແຂ້ວ, ຍົກເວັ້ນການເກີດອຸປະຕິເຫດແຮງງານ;

8). ຢາທຸກຊະນິດ ທີ່ໃຊ້ໃນການຢັບຢັ້ງການຂະຫຍາຍຕົວຂອງເຊື້ອ ເອັສໄອວີ;

9). ການກວດສຸຂະພາບປົກກະຕິປະຈຳປີ;

10). ການປິ່ນປົວທີ່ບໍ່ມີຄວາມຈຳເປັນທາງດ້ານການແພດ ເຊັ່ນ: ການຜ່າຕັດປ່ຽນເພດ, ການປະສົມພັນທຽມ, ການປ່ຽນອະໄວຍະວະ, ການເຮັດໝັນ ແລະ ການເສີມຄວາມງາມ ໂດຍມີເຈດຕະນາ.

4. ການບໍລິການປິ່ນປົວສຸຂະພາບຢູ່ຕ່າງປະເທດ ໃຫ້ປະຕິບັດສຳລັບຜູ້ປະກັນຕົນຕາມກໍລະນີ ດັ່ງນີ້:

1). ຜູ້ປະກັນຕົນ ທີ່ເຄື່ອນໄຫວວຽກງານທາງການໄລຍະສັ້ນຢູ່ຕ່າງປະເທດ ທີ່ເກີດມີການເຈັບເປັນກະທັນຫັນເຖິງຂັ້ນເຂົ້ານອນໂຮງໝໍ ຊຶ່ງມີຄວາມຈຳເປັນຕ້ອງເຂົ້າຮັບການບໍລິການປິ່ນປົວສຸຂະພາບຢູ່ຕ່າງປະເທດ;

2). ຜູ້ປະກັນຕົນທີ່ກຳລັງປິ່ນປົວຢູ່ໂຮງໝໍພາຍໃນປະເທດ ຊຶ່ງມີເຫດຜົນຈຳເປັນທາງການແພດ ໂດຍໄດ້ຮັບການອະນຸຍາດຈາກໂຮງໝໍຄູ່ສັນຍາ ທີ່ກ່ຽວຂ້ອງ.

ສຳລັບການຈ່າຍເງິນທົດແທນຄ່າປິ່ນປົວສຸຂະພາບ ຢູ່ຕ່າງປະເທດຂອງຜູ້ປະກັນຕົນ ໃຫ້ຈ່າຍຕາມລະດັບຄ່າປິ່ນປົວສຸຂະພາບຢູ່ພາຍໃນປະເທດ ຕາມແຕ່ລະກໍລະນີຂອງການປິ່ນປົວ ໂດຍແມ່ນໂຮງໝໍທີ່ຜູ້ປະກັນຕົນໄດ້ເລືອກໄວ້ເປັນຜູ້ຄິດໄລ່ຈ່າຍທົດແທນຄືນ. ໃນກໍລະນີອັນຈຳເປັນ ໃຫ້ປຶກສາຫາລືຮ່ວມກັບຄະນະສະພາການແພດ.

### 2.1.3. ມາດຕາ 15 ການນຳໃຊ້ເງິນອຸດໜູນປິ່ນປົວສຸຂະພາບ

ເງິນອຸດໜູນປິ່ນປົວສຸຂະພາບ ຈະໄດ້ໂອນຈາກກອງທຶນປະກັນສັງຄົມແຫ່ງຊາດ ໄປໃຫ້ກອງທຶນປະກັນສຸຂະພາບແຫ່ງຊາດ ຫຼື ໂຮງໝໍຄູ່ສັນຍາ ຕາມອັດຕາເງິນມອບເໝົາ ເພື່ອນຳໃຊ້ເຂົ້າໃນການບໍລິການປິ່ນປົວສຸຂະພາບໃຫ້ແກ່ຜູ້

ປະກັນຕົນ ແລະ ສະມາຊິກຄອບຄົວທີ່ເກີດສິດ.

ລະດັບອັດຕາເງິນມອບເໝົາປິ່ນປົວສຸຂະພາບໄດ້ກຳນົດເປັນຈຳນວນເງິນ ຕໍ່ຄົນຕໍ່ປີ ແລະ ຈະໄດ້ດັດປັບໃຫ້ເໝາະສົມກັບການໃຊ້ຈ່າຍດ້ານການແພດ ໂດຍອີງຕາມການສຶກສາຕົ້ນທຶນປິ່ນປົວສຸຂະພາບ ໃນແຕ່ລະໄລຍະ ຊຶ່ງມີການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການນຳໃຊ້ໃຫ້ມີຄວາມຖືກຕ້ອງ ແລະ ຊັດເຈນ ເພື່ອຮັບປະກັນຄຸນນະພາບໃນການບໍລິການປິ່ນປົວສຸຂະພາບ.

**2.2. ມາດຕາ 16 ການອຸດໜູນອອກລູກ ຫຼື ຫຼຸລູກ**

ການອຸດໜູນອອກລູກ ຫຼື ຫຼຸລູກ ແມ່ນການສະໜອງການບໍລິການກ່ອນ ຫຼື ຫຼັງການອອກລູກ ຫຼື ຫຼຸລູກ ແລະການສະໜອງເງິນບຳເນັດເທື່ອດຽວ ຕໍ່ລູກ 1 ຄົນ.

ໃນກໍລະນີ ຜູ້ປະກັນຕົນອອກລູກ ຫຼື ຫຼຸລູກ ຫາກມີການເຈັບເປັນ ຊຶ່ງໄດ້ພັກວຽກ ເພື່ອຟື້ນຟູສຸຂະພາບ ກໍຍັງຈະໄດ້ຮັບເງິນອຸດໜູນຕື່ມອີກຕາມລະບຽບການ.

**2.2.1. ມາດຕາ 17 ເງື່ອນໄຂຮັບການອຸດໜູນອອກລູກ ຫຼື ຫຼຸລູກ**

ຜູ້ຈະໄດ້ຮັບການອຸດໜູນອອກລູກ ຫຼື ຫຼຸລູກ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຖອກເງິນເຂົ້າກອງທຶນປະກັນສັງຄົມ ແຕ່ 6 ເດືອນ ຂຶ້ນໄປ ໃນໄລຍະ 12 ເດືອນສຸດທ້າຍ;
2. ອອກລູກ ຫຼື ຫຼຸລູກ ຫຼັງຈາກຖືພາແຕ່ 3 ເດືອນຂຶ້ນໄປ ຫຼື ລູກຕາຍໃນທ້ອງ ໂດຍມີການຢັ້ງຢືນດ້ານການແພດຢ່າງຖືກຕ້ອງ.

**2.2.2. ມາດຕາ 18 ການຄິດໄລ່ເງິນບຳເນັດອອກລູກ ຫຼື ຫຼຸລູກ**

ເງິນບຳເນັດອອກລູກ ຫຼື ຫຼຸລູກ ໃຫ້ຜູ້ປະກັນຕົນເພດຍິງ ຫຼື ເມຍຂອງຜູ້ປະກັນຕົນ ທີ່ບໍ່ໄດ້ປະກອບອາຊີບໃດໜຶ່ງ ໃຫ້ຄິດໄລ່ເທົ່າກັບ 60% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ ຕໍ່ລູກ 1 ຄົນ, ຖ້າຫາກອອກລູກແຝດ ກໍໃຫ້ຄູນຕາມຈຳນວນລູກ.

ຜູ້ປະກັນຕົນເພດຍິງ ທີ່ຖອກເງິນສົມທົບບໍ່ທັນຄົບ 6 ເດືອນຕາມເງື່ອນໄຂ ແລະ ເມຍຂອງຜູ້ປະກັນຕົນ ທີ່ບໍ່ມີວຽກເຮັດງານທຳ ຫຼື ບໍ່ມີລາຍໄດ້ໃດໜຶ່ງ ທີ່ໄດ້ອອກລູກ ຫຼື ຫຼຸລູກ ຊຶ່ງຜົວຂອງຜູ້ກ່ຽວ ເປັນຜູ້ປະກັນຕົນທີ່ໄດ້ຖອກເງິນສົມທົບຄົບຕາມເງື່ອນໄຂແລ້ວ ກໍຈະໄດ້ຮັບເງິນບຳເນັດອອກລູກ ຫຼື ຫຼຸລູກ ເທົ່າກັບ 60% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍຂອງຜົວ.

ສຳລັບຜູ້ປະກັນຕົນ ທີ່ເອົາເດັກມາເປັນລູກລ້ຽງ ຈະບໍ່ໄດ້ຮັບການອຸດໜູນບຳເນັດອອກລູກ ຫຼື ຫຼຸລູກ.

**ຕົວຢ່າງ:** ນາງ ກ ມີເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 1.500.000 ກີບ x 60% = 900.000 ກີບ/ຄົນ/ຄັ້ງ.

**2.2.3. ມາດຕາ 19 ການຄິດໄລ່ເງິນອຸດໜູນອອກລູກ ຫຼື ຫຼຸລູກ**

ຜູ້ປະກັນຕົນເພດຍິງ ທີ່ເປັນພະນັກງານ- ລັດຖະກອນ, ທະຫານ ຫຼື ຕຳຫຼວດ ທີ່ພັກວຽກຍ້ອນການອອກລູກ ຫຼື ຫຼຸລູກ ຈະໄດ້ຮັບເງິນເດືອນເຕັມຕາມປົກກະຕິ.

ຜູ້ປະກັນຕົນເພດຍິງ ທີ່ເປັນຜູ້ອອກແຮງງານໃນຫົວໜ່ວຍແຮງງານ ທີ່ພັກວຽກຍ້ອນການອອກລູກ ຫຼື ຫຼຸລູກພາຍໃນໄລຍະ 3,5 ເດືອນນັ້ນ ຜູ້ກ່ຽວຈະໄດ້ຮັບເງິນເດືອນ ຫຼື ຄ່າແຮງງານຕາມປົກກະຕິ ໂດຍກອງທຶນປະກັນສັງຄົມແຫ່ງຊາດ ຮັບຜິດຊອບຈ່າຍ 80% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ. ສຳລັບສ່ວນຜິດດ່ຽງຂອງເງິນເດືອນປະກັນຕົນ, ເງິນເດືອນ ຫຼື ຄ່າແຮງງານທັງໝົດ ແມ່ນຜູ້ໃຊ້ແຮງງານ ເປັນຜູ້ຮັບຜິດຊອບຈ່າຍໃຫ້ຜູ້ກ່ຽວ.

ສຳລັບຜູ້ປະກັນຕົນ ທີ່ເອົາເດັກອາຍຸບໍ່ເກີນ 3 ເດືອນ ມາເປັນລູກລ້ຽງ ທີ່ຖືກຕ້ອງຕາມລະບຽບກົດໝາຍ ຈະໄດ້ຮັບເງິນອຸດໜູນອອກລູກ ຕາມໄລຍະການພັກວຽກຕົວຈິງ ແຕ່ສູງສຸດບໍ່ໃຫ້ເກີນ 3 ເດືອນ.

ຜູ້ປະກັນຕົນເພດຍິງ ທີ່ໄດ້ຮັບເງິນອຸດໜູນອອກລູກ ຫຼື ຫຼຸລູກ ຄົບກຳນົດແລ້ວ ຫາກສຸຂະພາບຍັງອ່ອນເພຍຢູ່ ກໍຕ້ອງໄປກວດ ແລະ ປະເມີນສຸຂະພາບຄືນ ໂດຍມີການຢັ້ງຢືນດ້ານການແພດ ເພື່ອຮັບເງິນອຸດໜູນປ່ວຍການ ຫຼື ເສຍອົງຄະ.

**ຕົວຢ່າງ 1 :** ນາງ ຂ ມີເງິນເດືອນປະກັນຕົນ ສະເລ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.
ການຄິດໄລ່: 1.500.000 ກີບ x 80% = 1.200.000 ກີບ/ເດືອນ.

**2.3. ມາດຕາ 20 ການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ຫຼື ອຸປະຕິເຫດອື່ນ**

ການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ຫຼື ອຸປະຕິເຫດອື່ນ ແມ່ນ ການສະໜອງເງິນອຸດໜູນເສຍກຳລັງແຮງງານຊົ່ວຄາວ, ເງິນອຸດໜູນເສຍອົງຄະເທື່ອດຽວ ຫຼື ລາຍເດືອນໃຫ້ຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ, ເປັນພະຍາດອາຊີບ, ປະສົບອຸປະຕິເຫດອື່ນ ຫຼື ເປັນພະຍາດທົ່ວໄປ.

**2.3.1. ມາດຕາ 21 ເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ**

ຜູ້ຈະໄດ້ຮັບການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມນັບແຕ່ 1 ເດືອນຂຶ້ນໄປ ສໍາລັບຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ 12 ເດືອນຂຶ້ນໄປ ສໍາລັບຜູ້ປະກັນຕົນທີ່ປະສົບອຸປະຕິເຫດອື່ນ;

2. ຂາດສະມັດຕະພາບແຮງງານ ແລະ ສະພາວະປົກກະຕິຂອງຈິດໃຈ ຍ້ອນປະສົບອຸປະຕິເຫດແຮງງານຢູ່ສະຖານທີ່ເຮັດວຽກ, ໄລຍະທາງໄປ-ກັບ ລະຫວ່າງທີ່ພັກເຊົາ ຫາ ບ່ອນເຮັດວຽກ ຫຼື ໄລຍະການເຄື່ອນໄຫວວຽກງານທາງການ;

3. ເປັນພະຍາດອາຊີບ ທີ່ເກີດຈາກວຽກງານວິຊາສະເພາະ;

4. ເສຍອົງຄະ ຫຼື ເສຍອະໄວຍະວະໃດໜຶ່ງຂອງຮ່າງກາຍ ຍ້ອນປະສົບອຸປະຕິເຫດແຮງງານ, ພະຍາດອາຊີບ ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ.

ເງື່ອນໄຂ ທີ 2, 3 ແລະ 4 ຂ້າງເທິງນີ້ ຕ້ອງມີການຢັ້ງຢືນດ້ານການແພດ.

**2.3.2. ມາດຕາ 22 ປະເພດ ແລະ ລະດັບການເສຍອົງຄະ**

ປະເພດ ແລະ ລະດັບການເສຍອົງຄະ ໄດ້ກໍານົດໄວ້ ຕາມຕາຕະລາງ ດັ່ງນີ້:

| ປະເພດ | ລະດັບເສຍອົງຄະ | ຮູບການອຸດໜູນ |
|---|---|---|
| 1 | 81-100% | ລາຍເດືອນ |
| 2 | 71-80% | ລາຍເດືອນ |
| 3 | 61-70% | ລາຍເດືອນ |
| 4 | 51-60% | ລາຍເດືອນ |
| 5 | 41-50% | ລາຍເດືອນ |
| 6 | 31-40% | ເທື່ອດຽວ |
| 7 | 21-30% | ເທື່ອດຽວ |
| 8 | 1-20% | ເທື່ອດຽວ |

**2.3.3. ການຈັດປະເພດ ແລະ ລະດັບການເສຍອົງຄະ**

ການຈັດປະເພດ ແລະ ລະດັບການເສຍອົງຄະ ຈະໄດ້ຮັບການຈັດຕັ້ງປະຕິບັດ ດັ່ງນີ້:

1). ຜູ້ປະກັນຕົນ ທີ່ປະສົບອຸປະຕິເຫດແຮງງານ, ເປັນພະຍາດອາຊີບ, ປະສົບອຸປະຕິເຫດອື່ນ ຫຼື ເປັນພະຍາດທົ່ວໄປ ແຕ່ປະເພດ 1 ຫາ 8 ຕ້ອງໄປກວດສຸຂະພາບຢູ່ໂຮງໝໍ ໂດຍມີການຢັ້ງຢືນດ້ານການແພດ ເພື່ອຮັບການອຸດໜູນເສຍກຳລັງແຮງງານຊົ່ວຄາວ ຫຼື ປ່ວຍການ. ຫຼັງຈາກນັ້ນ ຖ້າສຸຂະພາບບໍ່ດີຂຶ້ນ ໃຫ້ໄປກວດສຸຂະພາບຄືນໃໝ່ ໂດຍມີການຕີລາຄາປະເພດ ແລະ ລະດັບເສຍອົງຄະ ຈາກຄະນະຮັບຜິດຊອບຕີລາຄາແບ່ງຂັ້ນຂາດສະມັດຕະພາບແຮງງານ-ພິການ ຫຼື ເສຍອົງຄະ ຕາມປຶ້ມຄູ່ມືການແບ່ງຂັ້ນຂາດສະມັດຕະພາບແຮງງານ-ພິການ ຫຼື ເສຍອົງຄະ ຂອງກະຊວງສາທາລະນະສຸກ ເພື່ອພິຈາລະນາຮັບການອຸດໜູນເສຍອົງຄະ.

ໃນກໍລະນີ ມີເຫດຜົນທີ່ຈຳເປັນ ໃຫ້ນຳເອົາຜົນການຕີລາຄາປະເພດ ແລະ ລະດັບການເສັຍອົງຄະ ໄປຜ່ານສະພາການແພດ ເພື່ອພິຈາລະນາຮັບຮອງ.

2). ຜູ້ເສັຍອົງຄະ ແຕ່ລະປະເພດ ທີ່ໄດ້ຮັບເງິນອຸດໜູນເປັນລາຍເດືອນ ຫາກໄດ້ໄປເຮັດວຽກໃໝ່ຢູ່ຫົວໜ່ວຍແຮງງານໃດໜຶ່ງ ທີ່ມີເງິນເດືອນ ຕ້ອງໄດ້ສືບຕໍ່ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຕາມອັດຕາສ່ວນເງິນສົມທົບທີ່ໄດ້ກຳນົດໄວ້ ແລະ ຜູ້ກ່ຽວຈະກາຍເປັນຜູ້ເສັຍອົງຄະປະຈຳການ ໂດຍຈະໄດ້ຫຼຸດລະດັບເງິນອຸດໜູນເສັຍອົງຄະ ຕາມລະບຽບການ.

3). ປະເພດ ແລະ ລະດັບການເສັຍອົງຄະ ຍ້ອນການສູນເສັຍອົງຄະໃດໜຶ່ງ ທີ່ໄດ້ຕົກລົງອະນຸມັດແລ້ວ ບໍ່ໃຫ້ມີການປ່ຽນແປງ. ໃນກໍລະນີ ການເສັຍອົງຄະ ຍ້ອນອະໄວຍະວະໃດໜຶ່ງ ທີ່ຈະເກີດມີການຊຸດໂຊມລົງ ຫຼື ດີຂຶ້ນ ກໍຈະພິຈາລະນາໃຫ້ມີການປະເມີນສຸຂະພາບຄືນໃໝ່.

4). ຜູ້ເສັຍອົງຄະລາຍເດືອນ ຍ້ອນການສູ້ຣົບ ແລະ ຮັບໃຊ້ການສູ້ຣົບ ທີ່ໄດ້ຮັບການອຸດໜູນເສັຍອົງຄະມາກ່ອນແລ້ວ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

### 2.3.4. ມາດຕາ 23 ການຄິດໄລ່ເງິນອຸດໜູນເສັຍກຳລັງແຮງງານຊົ່ວຄາວ

ເງິນອຸດໜູນເສັຍກຳລັງແຮງງານຊົ່ວຄາວ ຂອງຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ເທົ່າກັບ 70% ຂອງເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ໃນໄລຍະບໍ່ເກີນ 6 ເດືອນ ເປັນໄລຍະທຳອິດ.

ໃນກໍລະນີ ຜູ້ເສັຍກຳລັງແຮງງານຊົ່ວຄາວ ທີ່ໄດ້ຮັບເງິນອຸດໜູນຄົບ 6 ເດືອນແລ້ວ ຫາກຍັງບໍ່ສາມາດຕີລາຄາເປັນການເສັຍອົງຄະ ກໍໃຫ້ໄປກວດສຸຂະພາບຄືນໃໝ່ ໂດຍມີການຢັ້ງຢືນດ້ານການແພດ ເພື່ອສືບຕໍ່ຮັບອຸດໜູນເສັຍກຳລັງຊົ່ວຄາວ ເທົ່າກັບ 60% ຂອງເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ໃນໄລຍະບໍ່ເກີນ 6 ເດືອນເປັນໄລຍະສຸດທ້າຍ.

**ຕົວຢ່າງ:** ທ້າວ ຄ ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 1.500.000 ກີບ x 70% = 1.050.000 ກີບ.

ເງິນອຸດໜູນເສັຍກຳລັງແຮງງານຊົ່ວຄາວ ຂອງຜູ້ປະກັນຕົນທີ່ປະສົບອຸປະຕິເຫດອື່ນ ຫຼື ເປັນພະຍາດທົ່ວໄປ ເທົ່າກັບ 60% ຂອງເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ໃນໄລຍະບໍ່ເກີນ 6 ເດືອນ.

**ຕົວຢ່າງ:** ທ້າວ ງ ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 1.500.000 ກີບ x 60% = 900.000 ກີບ.

### 2.3.5. ມາດຕາ 24 ການຄິດໄລ່ເງິນອຸດໜູນເສັຍອົງຄະເທື່ອດຽວ

ເງິນອຸດໜູນເສັຍອົງຄະເທື່ອດຽວ ຂອງຜູ້ປະກັນຕົນທີ່ເສັຍອົງຄະ ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບແຕ່ປະເພດ 6 ຫາ 8 ເທົ່າກັບລະດັບການເສັຍອົງຄະ ຄູນ 12 ເດືອນ ຕາມເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

**ຕົວຢ່າງ:** ທ້າວ ຈ ເສັຍອົງຄະປະເພດ 6, ລະດັບ 31%, ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 31% x12 ເດືອນ x 1.500.000 ກີບ = 5.580.000 ກີບ.

ເງິນອຸດໜູນເສັຍອົງຄະເທື່ອດຽວ ຂອງຜູ້ເສັຍອົງຄະຍ້ອນອຸປະຕິເຫດອື່ນ ຫຼື ເປັນພະຍາດທົ່ວໄປ ເທົ່າກັບລະດັບການເສັຍອົງຄະ ຄູນ 10 ເດືອນ ຕາມເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

**ຕົວຢ່າງ:** ທ້າວ ສ ເສັຍອົງຄະປະເພດ 6, ລະດັບ 31%, ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 31% x10 ເດືອນ x 1.500.000 ກີບ = 4.650.000 ກີບ.

### 2.3.6. ມາດຕາ 25 ການຄິດໄລ່ເງິນອຸດໜູນເສັຍອົງຄະລາຍເດືອນ

ເງິນອຸດໜູນເສັຍອົງຄະລາຍເດືອນ ຂອງຜູ້ປະກັນຕົນທີ່ເສັຍອົງຄະຍ້ອນອຸປະຕິເຫດແຮງງານ ຫຼື ເປັນພະຍາດອາຊີບ ແຕ່ປະເພດ 1 ຫາ 5 ເທົ່າກັບລະດັບການເສັຍອົງຄະ ຄູນ ເງິນເດືອນປະກັນຕົນ ສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

**ຕົວຢ່າງ:** ທ້າວ ຊ ເສຍອົງຄະປະເພດ 1, ລະດັບ 81%, ມີເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 81% x 1.500.000 ກີບ =1.215.000 ກີບ/ເດືອນ.

ຖ້າຜູ້ເສຍອົງຄະ ຫາກຍັງປະຕິບັດໜ້າທີ່ປະຈໍາການ ຊຶ່ງໄດ້ຮັບເງິນເດືອນປົກກະຕິ ຫຼື ພັກຮັບເງິນອຸດໜູນບໍານານແລ້ວ ຜູ້ກ່ຽວຍັງໄດ້ຮັບເງິນ 50% ຂອງເງິນອຸດໜູນເສຍອົງຄະຂອງຕົນ.

ເງິນອຸດໜູນເສຍອົງຄະປະຈໍາການ ໃຫ້ຖືເອົາຊັ້ນຂັ້ນເງິນເດືອນຂອງຜູ້ກ່ຽວ ໃນເວລາໄດ້ຮັບການອະນຸມັດປະເພດ ແລະ ລະດັບການເສຍອົງຄະເປັນຕົວຕັ້ງ ໂດຍບໍ່ໃຫ້ຄິດໄລ່ເພີ່ມຕາມການເລື່ອນຊັ້ນຂັ້ນເງິນເດືອນ ຕາມປົກກະຕິ.

**ຕົວຢ່າງ:** ທ້າວ ຍ ໄດ້ຮັບເງິນເດືອນປົກກະຕິ ຫຼື ຮັບອຸດໜູນບໍານານ, ເງິນອຸດໜູນເສຍອົງຄະຂອງຜູ້ກ່ຽວ ເທົ່າກັບ 1.215.000 ກີບ.

ການຄິດໄລ່: 1.215.000 ກີບ x 50% = 607.500 ກີບ/ເດືອນ.

ເງິນອຸດໜູນເສຍອົງຄະລາຍເດືອນ ຂອງຜູ້ເສຍອົງຄະ ຍ້ອນອຸປະຕິເຫດອື່ນ ຫຼື ເປັນພະຍາດທົ່ວໄປ ເທົ່າກັບລະດັບການເສຍອົງຄະ ຄູນ 90% ຂອງເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

**ຕົວຢ່າງ:** ທ້າວ ດ ເສຍອົງຄະປະເພດ 2, ລະດັບ 71% ມີເງິນເດືອນປະກັນຕົນສະເລ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 71% x (90% x 1.500.000 ກີບ) = 958.500 ກີບ/ເດືອນ.

ຖ້າຜູ້ກ່ຽວ ຫາກຍັງປະຕິບັດໜ້າທີ່ປະຈໍາການ ກໍຈະໄດ້ຮັບເງິນ 50% ຂອງເງິນອຸດໜູນເສຍອົງຄະ ແລະ ໄດ້ຮັບເງິນ 25% ຂອງເງິນອຸດໜູນເສຍອົງຄະ ໃນເວລາພັກຮັບເງິນອຸດໜູນບໍານານ.

**ຕົວຢ່າງ:** ທ້າວ ຕ ມີເງິນອຸດໜູນເສຍອົງຄະ ເທົ່າກັບ 958.500 ກີບ.

- ໄລຍະຍັງປະຈໍາການ ເທົ່າກັບ 958.500 ກີບ x 50% = 479.250 ກີບ/ເດືອນ.
- ໄລຍະພັກຮັບບໍານານ ເທົ່າກັບ 958.500 ກີບ x 25% = 239.625 ກີບ/ເດືອນ.

ສໍາລັບຜູ້ເສຍອົງຄະ ທີ່ໄດ້ຮັບການອຸດໜູນເສຍອົງຄະ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບມາກ່ອນແລ້ວ ໃຫ້ປະຕິບັດການຄິດໄລ່ການອຸດໜູນເສຍອົງຄະ ຕາມລະບຽບການທີ່ກ່ຽວຂ້ອງ.

### 2.3.7. ມາດຕາ 26 ການປະກອບອຸປະກອນ ຫຼື ອົງຄະທຽມ ໃຫ້ຜູ້ເສຍອົງຄະ

ຜູ້ເສຍອົງຄະລາຍເດືອນ ຍ້ອນປະສົບອຸປະຕິເຫດແຮງງານ, ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປທີ່ມີຜົນກະທົບຕໍ່ການເຄື່ອນໄຫວວຽກງານ ແລະ ການດໍາລົງຊີວິດ ຈະໄດ້ຮັບການປະກອບອຸປະກອນ ຫຼື ອົງຄະທຽມຕາມຄວາມສາມາດສະໜອງຢູ່ພາຍໃນປະເທດ ຊຶ່ງໄດ້ກໍານົດມູນຄ່າອຸປະກອນ ຫຼື ອົງຄະທຽມ ໄວ້ໃນລະບຽບການສະເພາະ.

ໃນກໍລະນີ ມີການໃຊ້ຈ່າຍສໍາລັບອຸປະກອນ ຫຼື ອົງຄະທຽມ ໃຫ້ນໍາໃຊ້ງົບປະມານຂອງກອງທຶນປະກັນສັງຄົມແຫ່ງຊາດ.

### 2.3.8. ມາດຕາ 27 ການອຸດໜູນຜູ້ດູແລຜູ້ເສຍອົງຄະ

ຜູ້ເສຍອົງຄະ ປະເພດ 1 ທີ່ບໍ່ສາມາດຊ່ວຍຕົນເອງໄດ້ ຈະມີຜູ້ດູແລ ຊຶ່ງໄດ້ຮັບເງິນອຸດໜູນດູແລ ເປັນລາຍເດືອນເທົ່າກັບ 70% ຂອງເງິນອຸດໜູນເສຍອົງຄະຂອງຜູ້ເສຍອົງຄະ ຕາມຄວາມເປັນຈິງ.

**ຕົວຢ່າງ:** ທ້າວ ຖ ເສຍອົງຄະປະເພດ 1 ເທົ່າກັບ 1.215.000 ກີບ.

ການຄິດໄລ່: 70% x 1.215.000 ກີບ = 850.500 ກີບ/ເດືອນ.

ໃນກໍລະນີ ຜູ້ເສຍອົງຄະປະເພດ 1 ຫຼື ປະເພດພິເສດ ຢູ່ສູນເສຍອົງຄະ ທີ່ໄດ້ເສຍຊີວິດແລ້ວ ຜູ້ດູແລ ຈະໄດ້ຮັບເງິນອຸດໜູນດູແລເທື່ອດຽວ ເທົ່າກັບ 5 ເດືອນ ຂອງເງິນອຸດໜູນດູແລ ເປັນຈຸດເລີ່ມ, ຖ້າປີດູແລຫາກເກີນ 5 ປີຂຶ້ນໄປ ກໍຈະໄດ້ຮັບເພີ່ມ 2 ປີໃດ ເທົ່າກັບ 1 ເດືອນ.

## 2.4. ມາດຕາ 28 ການອຸດໜູນປ່ວຍການ

ການອຸດໜູນປ່ວຍການ ແມ່ນການສະໜອງເງິນອຸດໜູນໃຫ້ຜູ້ປະກັນຕົນທີ່ຍັງບໍ່ສາມາດກັບມາເຮັດວຽກປົກກະຕິຍ້ອນປະສົບອຸປະຕິເຫດອື່ນ, ພະຍາດອື່ນ ແລະ ການອອກລູກ ຫຼື ຫຼຸລູກ ຊຶ່ງຖືກຢຸດຈ່າຍເງິນເດືອນຊົ່ວຄາວໃນເວລາ

ປິ່ນປົວ ແລະ ຟື້ນຟູສຸຂະພາບ.

**2.4.1. ມາດຕາ 29 ເງື່ອນໄຂຮັບການອຸດໜູນປ່ວຍການ**

ຜູ້ຈະໄດ້ຮັບການອຸດໜູນປ່ວຍການ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຖອກເງິນເຂົ້າກອງທຶນປະກັນສັງຄົມ ນັບແຕ່ 3 ເດືອນຂຶ້ນໄປໃນໄລຍະ 6 ເດືອນສຸດທ້າຍ;
2. ໄດ້ຖືກຢຸດຈ່າຍເງິນເດືອນຊົ່ວຄາວ;
3. ມີການຢັ້ງຢືນດ້ານການແພດກ່ຽວກັບການປ່ວຍການ.

**2.4.2. ມາດຕາ 30 ການຄິດໄລ່ເງິນອຸດໜູນປ່ວຍການ**

ເງິນອຸດໜູນປ່ວຍການ ໃຫ້ຄິດໄລ່ເທົ່າກັບ 70% ຂອງເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ, ແຕ່ບໍ່ເກີນ 6 ເດືອນເປັນໄລຍະທຳອິດ.

**ຕົວຢ່າງ:** ນາງ ທ ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 1.500.000 ກີບ x 70% = 1.050.000 ກີບ/ເດືອນ.

ຖ້າຜູ້ກ່ຽວຫາກສືບຕໍ່ປິ່ນປົວ ໃຫ້ຄິດໄລ່ 60% ຂອງເງິນເດືອນປະກັນຕົນ ແຕ່ສູງສຸດບໍ່ເກີນ 6 ເດືອນ ເປັນໄລຍະສຸດທ້າຍ.

**ຕົວຢ່າງ:** ນາງ ນ ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 60% x 1.500.000 ກີບ = 900.000 ກີບ/ເດືອນ.

ໃນກໍລະນີ ການອຸດໜູນປ່ວຍການຫາກເກີນ 12 ເດືອນ ຕ້ອງໄດ້ຮັບການຕີລາຄາສຸຂະພາບຄືນໃໝ່ຈາກຄະນະຮັບຜິດຊອບຕີລາຄາແບ່ງຂັ້ນສະມັດຕະພາບແຮງງານ-ພິການ ຫຼື ເສຍອົງຄະ ເພື່ອຮັບການອຸດໜູນເສຍອົງຄະ.

**2.5. ມາດຕາ 31 ການອຸດໜູນບຳນານ**

ການອຸດໜູນບຳນານ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜູ້ປະກັນຕົນ ທີ່ຄົບເງື່ອນໄຂພັກຮັບບຳນານ.

**2.5.1. ມາດຕາ 32 ເງື່ອນໄຂຮັບການອຸດໜູນບຳນານ**

ຜູ້ປະກັນຕົນທີ່ໄດ້ຮັບການອຸດໜູນບຳນານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜູ້ເຮັດການປະຕິວັດ ນັບແຕ່ປີ 1975 ເປັນຕົ້ນມາ ມີກະສຽນອາຍຸ 60 ປີ ສຳລັບເພດຊາຍ ແລະ 55 ປີ ຂຶ້ນໄປ ສຳລັບເພດຍິງ ແລະ ມີປີການ 25 ປີຂຶ້ນໄປ.

ໃນກໍລະນີ ຜູ້ທີ່ໄດ້ຖອກເງິນສົມທົບເກີນ 25 ປີຂຶ້ນໄປ, ແຕ່ຜູ້ກ່ຽວມີສຸຂະພາບອ່ອນເພຍ ແລະ ມີກະສຽນອາຍຸບໍ່ຄົບແຕ່ 3 ປີ ລົງມາ ກໍສາມາດຮັບບຳນານ, ໃນນັ້ນກະສຽນອາຍຸຫຼຸດ 1 ປີໃດ ໃຫ້ຫຼຸດ 1% ຂອງອັດຕາສ່ວນຮ້ອຍອຸດໜູນບຳນານ.

2. ຜູ້ເຮັດການປະຕິວັດກ່ອນປີ 1975, ຜູ້ເສຍອົງຄະປະເພດ 1 ຫາ 4 ແລະ ຜູ້ເຮັດວຽກກັບທາດເບື່ອລຽນຕິດແຕ່ 5 ປີຂຶ້ນໄປ, ມີກະສຽນອາຍຸ 55 ປີ ສຳລັບເພດຊາຍ, 50 ປີ ສຳລັບເພດຍິງ ແລະ ມີປີການ 20 ປີຂຶ້ນໄປ.

3. ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ມີກະສຽນອາຍຸ 60 ປີ ສຳລັບເພດຊາຍ ແລະ 55 ປີ ຂຶ້ນໄປ ສຳລັບເພດຍິງ ແລະ ມີປີປະກັນຕົນ 15 ປີຂຶ້ນໄປ.

ໃນກໍລະນີ ຜູ້ປະກັນຕົນ ທີ່ໄດ້ຖອກເງິນສົມທົບເກີນ 5 ປີຂຶ້ນໄປ ສຳລັບຜູ້ທີ່ປະກັນຕົນຕາມດຳລັດ 207/ນຍ ຫຼື ເກີນ 15 ປີຂຶ້ນໄປ ຕາມກົດໝາຍ ວ່າດ້ວຍການປະກັນສັງຄົມ ຊຶ່ງຜູ້ກ່ຽວມີສຸຂະພາບອ່ອນເພຍ ໂດຍມີການຢັ້ງຢືນດ້ານການແພດ ແລະ ມີກະສຽນອາຍຸບໍ່ຄົບ 3 ປີລົງມາ ກໍສາມາດພັກການຮັບບຳນານ, ໃນນັ້ນກະສຽນອາຍຸຫຼຸດ 1 ປີໃດ ໃຫ້ຫຼຸດ 1% ຂອງເງິນອຸດໜູນບຳນານຂອງຜູ້ກ່ຽວ.

4. ມີຂໍ້ຕົກລົງວ່າດ້ວຍການອະນຸມັດພັກຮັບບຳນານ ຈາກຂະແໜງການ ຫຼື ຫົວໜ່ວຍແຮງງານທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ.

**2.5.2. ມາດຕາ 33 ການກຳນົດອັດຕາສ່ວນຮ້ອຍອຸດໜູນບຳນານ**

ການກຳນົດອັດຕາສ່ວນຮ້ອຍອຸດໜູນບຳນານ ມີ ດັ່ງນີ້:

1. ອັດຕາສ່ວນຮ້ອຍອຸດໜູນບໍານານສໍາລັບພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ ໃຫ້ຄິດໄລ່ ເປັນ 3 ໄລຍະ ດັ່ງນີ້:

- ຜູ້ເຮັດການປະຕິວັດ ແຕ່ປີ 1954 ຄືນຫຼັງ ຈະໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານ ໂດຍເລີ່ມຈາກ 80% ຫາ 100% ໃຫ້ຈັດເຂົ້າໃນໄລຍະທີ 1;
- ຜູ້ເຮັດການປະຕິວັດ ແຕ່ປີ 1955 ຫາ ປີ 1974 ຈະໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານ ໂດຍເລີ່ມຈາກ 75% ຫາ 90% ໃຫ້ຈັດເຂົ້າໃນໄລຍະທີ 2;
- ຜູ້ເສຍອົງຄະປະເພດ 1 ຫາ 4 ແລະ ຜູ້ເຮັດວຽກກັບທາດເບື່ອລຽນຕິດ 5 ປີຂຶ້ນໄປ ທີ່ໄດ້ເຮັດວຽກ ແຕ່ປີ 1975 ເປັນຕົ້ນມາ ແລະ ມີປີການ 20 ປີຂຶ້ນໄປ ຈະໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານ ໂດຍເລີ່ມຈາກ 70% ຫາ 85% ໃຫ້ຈັດເຂົ້າໃນໄລຍະທີ 3;
- ຜູ້ເຮັດການປະຕິວັດ ແຕ່ປີ 1975 ເປັນຕົ້ນມາ ຈະໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານ ໂດຍເລີ່ມຈາກ 70% ຫາ 85% ໃຫ້ຈັດເຂົ້າໃນໄລຍະທີ 3;
- ຜູ້ເຮັດການໃນລະບອບເກົ່າ ກ່ອນປີ 1975 ທີ່ໄດ້ຮັບປີການ 3 ປີໃດ ເທົ່າກັບ 1 ປີການ ຈະໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານ ຄື: ຜູ້ເຮັດການໃນລະບອບເກົ່າ ແຕ່ໄດ້ເຂົ້າການປະຕິວັດ ກ່ອນປີ 1975 ຈະໄດ້ຮັບອັດຕາສ່ວນຮ້ອຍການອຸດໜູນບໍານານ ເລີ່ມແຕ່ 75% ຫາ 90% ໃຫ້ຈັດເຂົ້າໃນໄລຍະທີ 2, ສ່ວນຜູ້ເຂົ້າການປະຕິວັດນັບແຕ່ປີ 1975 ເປັນຕົ້ນມາ ຈະໄດ້ຮັບອັດຕາສ່ວນຮ້ອຍບໍານານ ໂດຍເລີ່ມຈາກ 70% ຫາ 85% ໃຫ້ຈັດເຂົ້າໃນໄລຍະທີ 3.

ສໍາລັບຜູ້ໄດ້ຮັບອັດຕາສ່ວນຮ້ອຍອຸດໜູນບໍານານໃນແຕ່ລະໄລຍະມາກ່ອນແລ້ວ ໃຫ້ຮັກສາຄືເກົ່າ, ສ່ວນຜູ້ທີ່ຈະອອກພັກຮັບບໍານານໃນຕໍ່ໜ້ານີ້ ໃຫ້ປະຕິບັດຕາມອັດຕາສ່ວນຮ້ອຍອຸດໜູນບໍານານຂອງແຕ່ລະໄລຍະ ຕາມທີ່ໄດ້ກໍານົດໄວ້ໃນຂ້າງເທິງນີ້.

2. ສໍາລັບຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ໃຫ້ຖືເອົາຄະແນນບໍານານ, ເງິນເດືອນປະກັນຕົນ, ເງິນເດືອນ ຫຼື ຄ່າແຮງງານສະເລັ່ຍ ແລະ ດັດສະນີ ເປັນຕົວຄິດໄລ່ເງິນອຸດໜູນບໍານານ.

**2.5.3. ມາດຕາ 34 ການຄິດໄລ່ອັດຕາສ່ວນຮ້ອຍອຸດໜູນບໍານານ ແລະ ເງິນອຸດໜູນບໍານານ**

ອັດຕາສ່ວນຮ້ອຍອຸດໜູນບໍານານ ໃຫ້ຄິດໄລ່ ດັ່ງນີ້:

1). ການຄິດໄລ່ອັດຕາສ່ວນຮ້ອຍອຸດໜູນບໍານານ ສໍາລັບພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ ໃຫ້ເອົາປີການທຽບກັບອັດຕາສ່ວນຮ້ອຍອຸດໜູນບໍານານຂອງແຕ່ລະໄລຍະ ເປັນຈຸດເລີ່ມ, ຖ້າປີການຫາກເກີນ 1 ປີໃດ ຈະໄດ້ເພີ່ມ 1% ຂອງອັດຕາສ່ວນຮ້ອຍອຸດໜູນບໍານານ, ແຕ່ບໍ່ໃຫ້ເກີນອັດຕາສ່ວນຮ້ອຍສູງສຸດ ຕາມທີ່ໄດ້ກໍານົດໄວ້ໃນ 3 ໄລຍະ ຕາມຕາຕະລາງ ດັ່ງນີ້:

| ໄລຍະທີ 1 ສໍາລັບເປົ້າໝາຍ ປີ 1954 ຄືນຫຼັງ | | ໄລຍະທີ 2 ສໍາລັບເປົ້າໝາຍ ປີ 1955-1974 | | ໄລຍະທີ 3 ສໍາລັບເປົ້າໝາຍ ປີ 1975 ເປັນຕົ້ນມາ | | |
|---|---|---|---|---|---|---|
| ປີການ 20 | ສ່ວນຮ້ອຍບໍານານ ແຕ່ 80%-100% | ປີການ 20 | ສ່ວນຮ້ອຍບໍານານ ແຕ່ 75%-90% | ປີການ | | ສ່ວນຮ້ອຍບໍານານ ແຕ່ 70%-85% |
| | | | | 20 | 25 | |
| 20 | 80 | 20 | 75 | 20 | 25 | 70 |
| 21 | 81 | 21 | 76 | 21 | 26 | 71 |
| 22 | 82 | 22 | 77 | 22 | 27 | 72 |
| 23 | 83 | 23 | 78 | 23 | 28 | 73 |
| 24 | 84 | 24 | 79 | 24 | 29 | 74 |
| 25 | 85 | 25 | 80 | 25 | 30 | 75 |
| 26 | 86 | 26 | 81 | 26 | 31 | 76 |
| 27 | 87 | 27 | 82 | 27 | 32 | 77 |
| 28 | 88 | 28 | 83 | 28 | 33 | 78 |

| | | | | | | |
|---|---|---|---|---|---|---|
| 29 | 89 | 29 | 84 | 29 | 34 | 79 |
| 30 | 90 | 30 | 85 | 30 | 35 | 80 |
| 31 | 91 | 31 | 86 | 31 | 36 | 81 |
| 32 | 92 | 32 | 87 | 32 | 37 | 82 |
| 33 | 93 | 33 | 88 | 33 | 38 | 83 |
| 34 | 94 | 34 | 89 | 34 | 39 | 84 |
| 35 | 95 | 35 ຂຶ້ນໄປ | 90 | 35 ຂຶ້ນໄປ | 40 ຂຶ້ນໄປ | 85 |
| 36 | 96 | | | | | |
| 37 | 97 | | | | | |
| 38 | 98 | | | | | |
| 39 | 99 | | | | | |
| 40 ຂຶ້ນໄປ | 100 | | | | | |

2). ການຄິດໄລ່ເງິນອຸດໜູນບຳນານ

ການຄິດໄລ່ເງິນອຸດໜູນບຳນານ ໃຫ້ເອົາອັດຕາສ່ວນຮ້ອຍອຸດໜູນບຳນານ ຄູນ ເງິນເດືອນປະກັນຕົນເດືອນສຸດທ້າຍຂອງຜູ້ກ່ຽວ.

ເງິນເດືອນປະກັນຕົນ ປະກອບດ້ວຍເງິນເດືອນພື້ນຖານ, ເງິນອຸດໜູນປີການ, ເງິນອຸດໜູນຕຳແໜ່ງ ແລະ ເງິນອຸດໜູນວິຊາການອື່ນ.

ເງິນອຸດໜູນວິຊາການອື່ນ ເປັນຕົ້ນ ເງິນອຸດໜູນທາດເບື່ອ, ເງິນອຸດໜູນສອນຫ້ອງຄວບ, ເງິນອຸດໜູນສິ່ງເສີມກອງທັບ ຫຼື ເງິນອຸດໜູນວິຊາຊີບ ທີ່ຈະຄິດໄລ່ເພີ່ມເຂົ້າໃນເງິນອຸດໜູນບຳນານນັ້ນ ຕ້ອງໄດ້ຫັກເປັນເງິນສົມທົບເຂົ້າກອງທຶນປະກັນສັງຄົມ ນັບແຕ່ 5 ປີ ຂຶ້ນໄປ ຢ່າງຕໍ່ເນື່ອງ ໂດຍມີການຢັ້ງຢືນ ຢ່າງຖືກຕ້ອງ.

ສຳລັບພະນັກງານບຳນານທີ່ໄດ້ຮັບການອຸດໜູນບຳນານ ໃນແຕ່ລະໄລຍະມາກ່ອນແລ້ວ ໃຫ້ຄິດໄລ່ການອຸດໜູນບຳນານຄືເກົ່າ ໂດຍບໍ່ມີການປ່ຽນແປງ.

**ຕົວຢ່າງ:** ນາງ ບ ອັດຕາສ່ວນຮ້ອຍບຳນານ 80% ມີເງິນເດືອນປະກັນຕົນເດືອນສຸດທ້າຍ
(ເງິນເດືອນພື້ນຖານ+ ເງິນປີການ+ເງິນຕຳແໜ່ງ ແລະ ເງິນອຸດໜູນວິຊາການອື່ນ)
ເທົ່າກັບ 1.800.000 ກີບ.
ການຄິດໄລ່: 80% x 1.800.000 ກີບ = 1.440.000 ກີບ/ເດືອນ.

**2.5.4. ການຄິດໄລ່ເງິນອຸດໜູນບຳນານ ໃຫ້ຜູ້ອອກແຮງງານໃນຫົວໜ່ວຍແຮງງານທີ່ໄດ້ປະກັນຕົນ**

ເງິນອຸດໜູນບຳນານ ຂອງຜູ້ປະກັນຕົນໃນຫົວໜ່ວຍແຮງງານ ເທົ່າກັບ ຄະແນນບຳນານທັງໝົດຂອງຜູ້ກ່ຽວ ຄູນ ເງິນເດືອນປະກັນຕົນສະເລ່ຍຄາດຄະເນ ຂອງຜູ້ປະກັນຕົນທັງໝົດ ຄູນ ຕົວດັດສະນີ ຊຶ່ງການຄິດໄລ່ ມີ ດັ່ງນີ້:

1). ຄະແນນບຳນານທັງໝົດຂອງຜູ້ກ່ຽວ

ຄະແນນບຳນານທັງໝົດຂອງຜູ້ກ່ຽວ ເທົ່າກັບ ຄະແນນບຳນານຈາກການຈ່າຍເງິນສົມທົບທັງໝົດ ບວກ ຄະແນນບຳນານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ບວກ ຄະແນນບຳນານນະໂຍບາຍ ຊຶ່ງມີ ດັ່ງນີ້:

- ຄະແນນບຳນານຈາກການຈ່າຍເງິນສົມທົບເທົ່າກັບ ຈຳນວນເງິນເດືອນປະກັນຕົນສະເລ່ຍຂອງຜູ້ກ່ຽວໃນແຕ່ລະປີ ຫານ ໃຫ້ຈຳນວນເງິນເດືອນປະກັນຕົນສະເລ່ຍຂອງຜູ້ປະກັນຕົນທັງໝົດໃນໄລຍະເວລາດຽວກັນ.

**ຕົວຢ່າງ:** ທ້າວ ປ ມີເງິນເດືອນປະກັນຕົນສະເລ່ຍ 1.500.000 ກີບ, ເງິນດືອນປະກັນຕົນສະເລ່ຍ ຂອງຜູ້ປະກັນຕົນທັງໝົດ 1.131.286 ກີບ
ການຄິດໄລ່: 1.500.000 ກີບ ÷ 1.131.286 ກີບ = 1,33 ຄະແນນ

- ຄະແນນບຳນານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ໃນເວລາຮັບເງິນອຸດໜູນປ່ວຍການ, ອອກລູກ ຫຼື ເສຍກຳລັງແຮງງານຊົ່ວຄາວ ເທົ່າກັບ ຄະແນນບຳນານຈາກການຈ່າຍເງິນສົມທົບສະເລ່ຍໄລຍະ 24 ເດືອນ ກ່ອນໄດ້ຮັບເງິນອຸດໜູນ ຫານ ໃຫ້ 30 ວັນ ຄູນ ກັບຈຳນວນວັນພັກຮັບເງິນອຸດໜູນ.

**ຕົວຢ່າງ:** ທ້າວ ປ ມີຄະແນນບໍານານ 2,66 ໃນ 24 ເດືອນ, ວັນພັກປ່ອຍການ 45 ວັນ

ການຄິດໄລ່: [(2,66 ÷ 24) ÷ 30] x 45 = 0,17 ຄະແນນ

- ຄະແນນບໍານານນະໂຍບາຍ ແມ່ນຄະແນນທີ່ຄິດໄລ່ໃຫ້ຜູ້ປະກັນຕົນ ທີ່ມີປີການປະກັນຕົນ 30 ປີລົງມາ ໂດຍໃຫ້ຄິດໄລ່ ເທົ່າກັບ 0.5 ຄະແນນ ຄູນ ຈໍານວນປີປະກັນຕົນທຽບກັບ 30 ປີ.

**ຕົວຢ່າງ:** ທ້າວ ປ ມີປີການປະກັນຕົນ 20 ປີ

ການຄິດໄລ່: (30 ປີ - 20 ປີ) x 0,5 = 5 ຄະແນນ

ຄະແນນບໍານານທັງໝົດ (1,33 x 20) + 0,17+5 = 31,77 ຄະແນນ

2). ເງິນເດືອນ ຫຼື ຄ່າແຮງງານສະເລັ່ຍຂອງຜູ້ປະກັນຕົນທັງໝົດ

- ເງິນເດືອນປະກັນຕົນສະເລັ່ຍຂອງຜູ້ປະກັນຕົນທັງໝົດ ເທົ່າກັບ ຈໍານວນເງິນເດືອນຂອງຜູ້ປະກັນຕົນທັງໝົດໃນໜຶ່ງປີ ຫານ ໃຫ້ຈໍານວນຄັ້ງຂອງຜູ້ປະກັນຕົນ ໄດ້ຈ່າຍເງິນສົມທົບໃນປີດຽວກັນນັ້ນ ຊຶ່ງນໍາໃຊ້ສໍາລັບການຄິດໄລ່ຄະແນນບໍານານ.

**ຕົວຢ່າງ:** ເງິນເດືອນຜູ້ປະກັນຕົນທັງໝົດໃນ 1 ປີ ເທົ່າກັບ 1.357.543.200 ກີບ, ຈໍານວນຄັ້ງຂອງຜູ້ປະກັນຕົນທີ່ໄດ້ຈ່າຍເງິນສົມທົບໃນ 1 ປີ ເທົ່າກັບ 1.200 ຄັ້ງ

ການຄິດໄລ່: 1.357.543.200 ກີບ ÷ 1.200 ຄັ້ງ = 1.131.286 ກີບ.

- ເງິນເດືອນປະກັນຕົນສະເລັ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ເທົ່າກັບ ເງິນເດືອນປະກັນຕົນສະເລັ່ຍທັງໝົດໃນໜຶ່ງປີຜ່ານມາ ບວກ ອັດຕາການເໜັງຕີງທີ່ສົມທຽບໃສ່ປີກ່ອນນັ້ນ 1 ປີ ຊຶ່ງນໍາໃຊ້ສໍາລັບການຄິດໄລ່ເງິນອຸດໜູນບໍານານ.

**ຕົວຢ່າງ:** ເງິນເດືອນປະກັນຕົນສະເລັ່ຍທັງໝົດໃນ 1 ປີຜ່ານມາ ເທົ່າກັບ 1.131.286 ກີບ, ອັດຕາການເໜັງຕີງສົມທຽບໃສ່ປີກ່ອນນັ້ນ 1 ປີ ເທົ່າກັບ 21%

ການຄິດໄລ່: (1.131.286 ກີບ x 21%) = 237.570 ກີບ

= 1.131.286 ກີບ+ 237.570 ກີບ = 1.368.856 ກີບ

3). ຕົວດັດສະນີ 2%

ຕົວດັດສະນີ 2% ສາມາດດັດປັບໃຫ້ສອດຄ່ອງກັບການຄິດໄລ່ເງິນອຸດໜູນບໍານານໃນແຕ່ລະໄລຍະ.

ການຄິດໄລ່ເງິນອຸດໜູນບໍານານໃຫ້ທ້າວ ປ ທີ່ມີປີການ 20 ປີ:

**ຕົວຢ່າງ:** ທ້າວ ປ ມີຄະແນນບໍານານທັງໝົດ 31,77 ຄະແນນ, ເງິນເດືອນປະກັນຕົນສະເລັ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ 1.368.856 ກີບ, ຕົວດັດສະນີ 2%.

ການຄິດໄລ່: 31,77 x 1.368.856 ກີບ x 2% = 869.771 ກີບ.

4). ເງິນເດືອນ ຫຼື ຄ່າແຮງງານສະເລັ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ສໍາລັບຜູ້ອອກແຮງງານໃນຫົວໜ່ວຍແຮງງານ ຈະໄດ້ປັບປຸງໃນເດືອນ ຕຸລາ ຂອງແຕ່ລະປີ.

5). ຜູ້ອອກແຮງງານທີ່ໄດ້ປະກັນຕົນກ່ອນກົດໝາຍວ່າດ້ວຍການປະກັນສັງຄົມ, ຖ້າຫາກມີປີການແຕ່ 5 ຫາ 14 ປີ ກໍສາມາດໄດ້ຮັບການອຸດໜູນບໍານານ. ສໍາລັບຜູ້ປະກັນຕົນ ທີ່ໄດ້ຮັບການອຸດໜູນບໍານານມາກ່ອນແລ້ວ ໃຫ້ຄິດໄລ່ການອຸດໜູນບໍານານຄືເກົ່າ, ສ່ວນຜູ້ທີ່ມີລະດັບການອຸດໜູນບໍານານຕໍ່າ ກໍຈະໄດ້ດັດປັບລະດັບການອຸດໜູນບໍານານ ໃຫ້ສອດຄ່ອງກັບຂໍ້ 1, 2 ແລະ 3 ຂ້າງເທິງນີ້.

6). ການຄິດໄລ່ເງິນອຸດໜູນບໍານານໃຫ້ຜູ້ປະກັນຕົນໃນຫົວໜ່ວຍແຮງງານ ໃຫ້ສົມທຽບເປັນອັດຕາສ່ວນຮ້ອຍສູງສຸດບໍ່ເກີນ 75% ຂອງເງິນເດືອນສະເລັ່ຍຄາດຄະເນ ຂອງຜູ້ປະກັນຕົນທັງໝົດ.

**2.5.5. ການຄິດໄລ່ເງິນອຸດໜູນບໍານານ ສໍາລັບຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ**

ການຄິດໄລ່ເງິນອຸດໜູນບໍານານ ສໍາລັບຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ກໍານົດໄວ້ ໃນຂໍ້ 2.5.3 ຂ້າງເທິງນີ້.

**2.5.6. ການຄິດໄລ່ເງິນອຸດໜູນເທື່ອດຽວ**

ເງິນອຸດໜູນເທື່ອດຽວຂອງຜູ້ປະກັນຕົນ ທີ່ບໍ່ມີເງື່ອນໄຂຄົບຖ້ວນໃນການຮັບອຸດໜູນບໍານານ ໃຫ້ຄິດໄລ່ເທົ່າກັບ 1,5 ເດືອນຂອງເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ ຄູນ ຈໍານວນປີການ ຫຼື ປີປະກັນຕົນຂອງຜູ້ກ່ຽວ.

ສຳລັບ ຜູ້ປະກັນຕົນ ທີ່ມີໄລຍະປະກັນຕົນ ແຕ່ 7 ຫາ 12 ເດືອນ ໃຫ້ຖືເປັນ 1 ປີ.

**ຕົວຢ່າງ:** ທ້າວ ຜ ມີເງິນເດືອນປະກັນຕົນສະເລ່ຍ 6ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ,ປີການ 15 ປີ.

ການຄິດໄລ່: 1.5 ເດືອນ x 1.500.000 ກີບ x 15 ປີການ = 33.750.000 ກີບ.

ໃນກໍລະນີ ຜູ້ປະກັນຕົນ ທີ່ບໍ່ຄົບເງື່ອນໄຂກະສຽນອາຍຸ, ປີການ ຫຼື ປີປະກັນຕົນ ຊຶ່ງໄດ້ອອກຈາກການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ, ແຕ່ຜູ້ກ່ຽວຍັງຢູ່ໃນໄວອາຍຸເຮັດວຽກ ແລະ ສາມາດສືບຕໍ່ເຮັດວຽກ ຈະບໍ່ໄດ້ຮັບການອຸດໜູນເທື່ອດຽວ ໂດຍຈະໄດ້ສະສົມເງິນສົມທົບຂອງຜູ້ກ່ຽວໄວ້ ເພື່ອພິຈາລະນາຮັບອຸດໜູນບໍານານ ເມື່ອກະສຽນອາຍຸຄົບຕາມເງື່ອນໄຂ.

ສຳລັບ ຜູ້ປະກັນຕົນ ທີ່ຈະໄດ້ຮັບເງິນອຸດໜູນເທື່ອດຽວ ມີຄື:

- ຜູ້ທີ່ມີກະສຽນອາຍຸຄົບຕາມເງື່ອນໄຂ, ແຕ່ມີປີການ ຫຼື ປີປະກັນຕົນບໍ່ຄົບ ຕາມເງື່ອນໄຂ;
- ຜູ້ທີ່ໄດ້ອອກຈາກວຽກ ທີ່ບໍ່ສາມາດສືບຕໍ່ເຮັດວຽກນໍາການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ ຍ້ອນບັນຫາສຸຂະພາບ;
- ຜູ້ປະກັນຕົນທີ່ເປັນຜູ້ອອກແຮງງານຕ່າງປະເທດ ທີ່ໄດ້ກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາແຮງງານ.

## 2.6. ມາດຕາ 37 ການອຸດໜູນເສັຍຊີວິດ

ການອຸດໜູນເສັຍຊີວິດ ແມ່ນ ການສະໜອງເງິນຊາປະນະກິດສົບ ແລະ ເງິນອຸດໜູນຄອບຄົວ ໃຫ້ແກ່ສະມາຊິກຄອບຄົວຂອງຜູ້ປະກັນຕົນທີ່ໄດ້ເສັຍຊີວິດ.

### 2.6.1. ມາດຕາ 38 ເງື່ອນໄຂຮັບການອຸດໜູນເສັຍຊີວິດ

ຜູ້ຈະໄດ້ຮັບການອຸດໜູນເສັຍຊີວິດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ນັບແຕ່ 3 ເດືອນຂຶ້ນໄປ ໃນໄລຍະ 6 ເດືອນສຸດທ້າຍ;
2. ມີໜັງສືຢັ້ງຢືນການເສັຍຊີວິດ ຢ່າງຖືກຕ້ອງ.

ຜູ້ປະກັນຕົນ ທີ່ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມຄົບເງື່ອນໄຂ ຊຶ່ງໄດ້ອອກຈາກການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ ພາຍໃນໄລຍະ 6 ເດືອນ ເມື່ອຜູ້ກ່ຽວເສັຍຊີວິດ ກໍຈະໄດ້ຮັບເງິນອຸດໜູນເສັຍຊີວິດ;

ເມື່ອຜູ້ປະກັນຕົນໄດ້ເສັຍຊີວິດ, ຜົວ ຫຼື ເມັຍ ແລະ ລູກຂອງຜູ້ກ່ຽວ ຍັງຈະໄດ້ຮັບສິດການອຸດໜູນເສັຍຊີວິດພາຍໃນໄລຍະ 3 ເດືອນຕໍ່ມາ.

### 2.6.2. ການຄິດໄລ່ເງິນອຸດໜູນເສັຍຊີວິດ

1). ເງິນອຸດໜູນຊາປະນະກິດສົບ

- ເງິນອຸດໜູນຊາປະນະກິດສົບຂອງຜູ້ປະກັນຕົນ, ພະນັກງານບໍານານ ແລະ ພະນັກງານເສັຍກໍາລັງແຮງງານ, ຜູ້ເສັຍອົງຄະ ຫຼື ເສັຍອົງຄະຮາກຖານ ທີ່ໄດ້ເສັຍຊີວິດ ໃຫ້ຄິດໄລ່ເທົ່າກັບ 12 ເດືອນຂອງເງິນເດືອນປະກັນຕົນ, ເງິນບໍານານ, ເງິນເສັຍກໍາລັງແຮງງານ ຫຼື ເສັຍອົງຄະ ໂດຍສະເລ່ຍເອົາ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

ສຳລັບ ຜູ້ເສັຍອົງຄະປະຈໍາການທີ່ໄດ້ຮັບເງິນເດືອນ ແລະ ເງິນອຸດໜູນເສັຍອົງຄະ, ພະນັກງານບໍານານທີ່ເສັຍອົງຄະ ທີ່ໄດ້ຮັບເງິນອຸດໜູນບໍານານ ແລະ ເງິນອຸດໜູນເສັຍອົງຄະ ໃຫ້ເລືອກເອົາເງິນເດືອນ ຫຼື ເງິນອຸດໜູນບໍານານເປັນຕົວຕັ້ງໃນການຄິດໄລ່ເງິນອຸດໜູນເສັຍຊີວິດ ໂດຍບໍ່ໃຫ້ຄິດໄລ່ລວມທັງເງິນເດືອນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສັຍອົງຄະເຂົ້າກັນ.

ຜົວ ຫຼື ເມັຍ ທີ່ລ້ວນແຕ່ເປັນຜູ້ປະກັນຕົນ ເມື່ອຜູ້ໃດໜຶ່ງໄດ້ເສັຍຊີວິດ ກໍຈະໄດ້ຮັບເງິນອຸດໜູນຊາປະນະກິດສົບເທົ່າກັບ 12 ເດືອນ ຕາມເງິນເດືອນປະກັນຕົນຂອງຜູ້ກ່ຽວ ໂດຍຈະບໍ່ໄດ້ຮັບເງິນຊາປະນະກິດສົບ ເທົ່າກັບ 6 ເດືອນຂອງເງິນເດືອນປະກັນຕົນຂອງ ຜົວ ຫຼື ເມັຍ ຕື່ມອີກ.

**ຕົວຢ່າງ:** ທ້າວ ຝ ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເງິນເສັຍອົງຄະ ສະເລ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 12 ເດືອນ x 1.500.000 ກີບ = 18.000.000 ກີບ.

- ຜົວ ຫຼື ເມັຍ ຂອງຜູ້ປະກັນຕົນ, ພະນັກງານບໍານານ ແລະ ພະນັກງານເສຍອົງຄະ ທີ່ບໍ່ແມ່ນຜູ້ປະກັນຕົນ ຫາກໄດ້ເສຍຊີວິດໃຫ້ຄິດໄລ່ເທົ່າກັບ 6 ເດືອນຂອງເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສຍອົງຄະ ເດືອນສຸດທ້າຍຂອງຜູ້ກ່ຽວ.

ສໍາລັບ ຜົວ ຫຼື ເມັຍ ຂອງຜູ້ເສຍອົງຄະຮາກຖານ ທີ່ໄດ້ຮັບການອະນຸມັດ ຕາມດໍາລັດ 343/ນຍ ທີ່ໄດ້ເສຍຊີວິດ ຈະໄດ້ຮັບເງິນອຸດໜູນຊາປະນະກິດສົບ ດັ່ງກ່າວນີ້, ສ່ວນຜູ້ທີ່ໄດ້ເສຍຊີວິດກ່ອນແລ້ວ ຈະບໍ່ໄດ້ພິຈາລະນາຄືນອີກ.

**ຕົວຢ່າງ:** ທ້າວ ພ ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເງິນເສຍອົງຄະ ສະເລັ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 6 ເດືອນ x 1.500.000 ກີບ = 9.000.000 ກີບ.

- ລູກ ທີ່ມີອາຍຸບໍ່ເກີນ 18 ປີ ຂອງຜູ້ປະກັນຕົນ, ພະນັກງານບໍານານ ແລະ ພະນັກງານເສຍອົງຄະ ຫາກໄດ້ເສຍຊີວິດໃຫ້ຄິດໄລ່ເທົ່າກັບ 3 ເດືອນຂອງເງິນເດືອນປະກັນຕົນ, ເງິນບໍານານ, ເງິນເສຍກໍາລັງແຮງງານ ຫຼື ເສຍອົງຄະ ໂດຍສະເລັ່ຍເອົາ 6 ເດືອນສຸດທ້າຍຂອງຜູ້ກ່ຽວ.

ສໍາລັບ ລູກ ຂອງຜູ້ເສຍອົງຄະຮາກຖານ ທີ່ໄດ້ຮັບການອະນຸມັດ ຕາມດໍາລັດ 343/ນຍ ທີ່ໄດ້ເສຍຊີວິດ ຈະໄດ້ຮັບເງິນອຸດໜູນຊາປະນະກິດສົບ ດັ່ງກ່າວນີ້, ສ່ວນຜູ້ທີ່ໄດ້ເສຍຊີວິດກ່ອນແລ້ວ ຈະບໍ່ໄດ້ພິຈາລະນາຄືນອີກ.

ໃນກໍລະນີ ທີ່ ພໍ່ ແລະ ແມ່ ລ້ວນແຕ່ເປັນຜູ້ປະກັນຕົນ, ລູກຈະໄດ້ຮັບການອຸດໜູນຊາປະນະກິດສົບ ຕາມເງິນເດືອນປະກັນຕົນຂອງ ພໍ່ ຫຼື ແມ່.

**ຕົວຢ່າງ:** ທ້າວ ຟ ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເງິນເສຍອົງຄະ ສະເລັ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 3 ເດືອນ x 1.500.000 ກີບ = 4.500.000 ກີບ.

2). ເງິນອຸດໜູນຄອບຄົວ

ເງິນອຸດໜູນຄອບຄົວໃຫ້ຄິດໄລ່ເທົ່າກັບເງິນເດືອນປະກັນຕົນ, ເງິນອຸດໜູນບໍານານ, ເງິນອຸດໜູນເສຍກໍາລັງແຮງງານ ຫຼື ເສຍອົງຄະ ໂດຍສະເລັ່ຍເອົາ 6 ເດືອນສຸດທ້າຍ ຄູນ 15 ປີການ ຫຼື ປີປະກັນຕົນ ເປັນຈຸດເລີ່ມ, ຖ້າຫາກເກີນ 15 ປີ ໃຫ້ຄິດໄລ່ເພີ່ມ 2 ປີໃດ ເທົ່າກັບ 1 ເດືອນ.

ຜູ້ປະກັນຕົນ ທີ່ເປັນໂສດ ຫຼື ພໍ່ໝ້າຍ ແມ່ໝ້າຍ ທີ່ບໍ່ມີລູກ, ແຕ່ ມີພໍ່ ແມ່ ອ້າຍເອື້ອຍນ້ອງຄີງ ຈະໄດ້ຮັບເງິນອຸດໜູນຄອບຄົວ.

ການຄິດໄລ່ປີການ ມີ ດັ່ງນີ້:

- ຜູ້ປະກັນຕົນທີ່ມີປີການເກີນ 15 ປີຂຶ້ນໄປ ໃຫ້ຄິດໄລ່ 15 ເດືອນ ເປັນຈຸດເລີ່ມ, ຖ້າຫາກເກີນ 15 ປີ ຂຶ້ນໄປ ໃຫ້ຄິດໄລ່ເພີ່ມ 2 ປີການໃດ ເທົ່າກັບ 1 ເດືອນ.
- ຜູ້ປະກັນຕົນທີ່ມີປີການຕໍ່າກວ່າ 15 ປີ ໃຫ້ຄິດໄລ່ ຄື:
  - ປີການແຕ່ 1 ປີລົງມາ (3 ເດືອນ ຫາ 12 ເດືອນ) ເທົ່າກັບ 5 ເດືອນ;
  - ປີການເກີນ 1 ປີ ຫາ 6 ປີ ໃຫ້ຄິດໄລ່ເພີ່ມ 1 ປີການໃດ ເທົ່າກັບ 1 ເດືອນ;
  - ປີການເກີນ 7 ຫາ 14 ປີ ໃຫ້ຄິດໄລ່ເພີ່ມ 2 ປີການໃດ ເທົ່າກັບ 1 ເດືອນ.
- ການຄິດໄລ່ແຕ່ລະປີການ ໃຫ້ຖືເອົາ 7 ເດືອນ ຫາ 12 ເດືອນ ເປັນ 1 ປີການ ແລະ 13 ເດືອນ ຂຶ້ນໄປເປັນ 2 ປີການ.

ການຄິດໄລ່ປີການ ເພື່ອສົມທຽບເດືອນ ໃຫ້ປະຕິບັດ ຕາມຕາຕະລາງ ດັ່ງນີ້:

| ຜູ້ມີປີການ 14 ປີລົງມາ | | ຜູ້ມີປີການ 15 ປີຂຶ້ນໄປ | |
|---|---|---|---|
| ປີການ | ລະດັບເງິນອຸດໜູນຄອບຄົວ | ປີການ | ລະດັບເງິນອຸດໜູນຄອບຄົວ |
| 1 | 5 ເດືອນ | 15 | 15 ເດືອນ |
| 2 | 6 ເດືອນ | 17 | 16 ເດືອນ |
| 3 | 7 ເດືອນ | 19 | 17 ເດືອນ |
| 4 | 8 ເດືອນ | 21 | 18 ເດືອນ |
| 5 | 9 ເດືອນ | 23 | 19 ເດືອນ |

| | | | |
|---|---|---|---|
| 6 | 10 ເດືອນ | 25 | 20 ເດືອນ |
| 7-8 | 11 ເດືອນ | 27 | 21 ເດືອນ |
| 9-10 | 12 ເດືອນ | 29 | 22 ເດືອນ |
| 11-12 | 13 ເດືອນ | 31 | 23 ເດືອນ |
| 13-14 | 14 ເດືອນ | 33 | 24 ເດືອນ |
| | | ການນັບປີການໃຫ້ເອົາຕາມປີການຕົວຈິງ ແລ້ວຄິດໄລ່ເປັນຈຳນວນເດືອນ | |

**ຕົວຢ່າງ1:** ທ້າວ ມ ມີເງິນເດືອນປະກັນຕົນ, ເງິນບຳນານ ຫຼື ເງິນເສຍອົງຄະ ສະເລ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ, ປີການ 16 ປີ ກັບ 1 ເດືອນ ໃຫ້ຄິດໄລ່ເປັນ 16 ປີການ ໃຫ້ເທົ່າກັບ 16 ເດືອນ.
ການຄິດໄລ່: 1.500.000 ກີບ x 16 ເດືອນ = 24.000.000 ກີບ.

**ຕົວຢ່າງ2:** ທ້າວ ຢ ມີເງິນເດືອນປະກັນຕົນ ຫຼື ເງິນເສຍອົງຄະສະເລ່ຍ 6 ເດືອນສຸດທ້າຍເທົ່າກັບ 1.500.000 ກີບ, ປີການ 1 ປີ ໃຫ້ເທົ່າກັບ 5 ເດືອນ.
ການຄິດໄລ່: 1.500.000 ກີບ x 5 ເດືອນ = 7.500.000 ກີບ.

### 2.7. ມາດຕາ 41 ການອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນ

ການອຸດໜູນສະມາຊິກຄອບຄົວ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜົວ ຫຼື ເມຍ, ລູກ, ພໍ່ ແລະ ແມ່ ຂອງຜູ້ປະກັນຕົນ ທີ່ໄດ້ເສຍຊີວິດ.

### 2.7.1. ມາດຕາ 42 ເງື່ອນໄຂຮັບການອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນ

ສະມາຊິກຄອບຄົວ ຈະໄດ້ຮັບການອຸດໜູນ ກໍຕໍ່ເມື່ອຜູ້ປະກັນຕົນ ທີ່ເສຍຊີວິດ ຫາກໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 5 ປີຂຶ້ນໄປ ສຳລັບລູກ, ຜົວ ຫຼື ເມຍ.

ສະມາຊິກຄອບຄົວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜົວມີກະສຽນອາຍຸ 60 ປີ, ເມຍ 55 ປີ ຂຶ້ນໄປ ທີ່ບໍ່ມີລາຍໄດ້ປົກກະຕິ ເປັນຕົ້ນ ລາຍຮັບຈາກທຸລະກິດໃດໜຶ່ງ, ເງິນອຸດໜູນບຳນານ, ເສຍອົງຄະ ແລະ ບໍ່ທັນໄດ້ແຕ່ງດອງໃໝ່ ຊຶ່ງມີການຢັ້ງຢືນ ຢ່າງຖືກຕ້ອງ ຈະໄດ້ຮັບເງິນອຸດໜູນໝ້າຍ ເປັນລາຍເດືອນຕະຫຼອດຊີວິດ;

2. ລູກຄີງ, ລູກລ້ຽງ ຫຼື ລູກນ້າ ທີ່ມີອາຍຸຕ່ຳກວ່າ 18 ປີ. ໃນກໍລະນີ ຜູ້ກ່ຽວມີວຽກເຮັດງານທຳ ຫຼື ມີລາຍໄດ້ເປັນລາຍເດືອນ ຈະບໍ່ໄດ້ຮັບການອຸດໜູນລູກກຳພ້າຕື່ມອີກ. ສ່ວນ ລູກ ທີ່ ພໍ່ ແລະ ແມ່ ລ້ວນແຕ່ເປັນຜູ້ປະກັນຕົນ ຊຶ່ງຜູ້ໃດໜຶ່ງໄດ້ເສຍຊີວິດແລ້ວ ຜູ້ກ່ຽວຈະບໍ່ໄດ້ຮັບການອຸດໜູນກຳພ້າ ດັ່ງກ່າວນີ້.

ສຳລັບລູກທີ່ເປັນຄົນພິການ ຫຼື ເສຍຈິດມາແຕ່ກຳເນີດ ຫຼື ໃນໄລຍະອາຍຸຕ່ຳກວ່າ 18 ປີ ທີ່ບໍ່ສາມາດເຮັດວຽກ ຫຼື ບໍ່ມີລາຍໄດ້ໃດໜຶ່ງ ຈະໄດ້ຮັບເງິນອຸດໜູນ ເປັນລາຍເດືອນ ຕະຫຼອດຊີວິດ.

3. ພໍ່ ທີ່ມີກະສຽນອາຍຸ 60 ປີ ແລະ ແມ່ 55 ປີຂຶ້ນໄປ ທີ່ບໍ່ມີລາຍໄດ້ປົກກະຕິ ເປັນຕົ້ນ ລາຍຮັບຈາກທຸລະກິດໃດໜຶ່ງ, ເງິນອຸດໜູນບຳນານ ຫຼື ເສຍອົງຄະ ຊຶ່ງລູກທີ່ເປັນຜູ້ປະກັນຕົນ ທີ່ໄດ້ເສຍຊີວິດ ເປັນລູກຄົນດຽວ ຫຼື ລູກໃຫຍ່ ເປັນຜູ້ເບິ່ງແຍງລ້ຽງດູ.

4. ພໍ່ ແມ່ ທີ່ມີລູກໄປເສຍສະຫຼະຊີວິດໝົດ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ທີ່ໄດ້ຮັບການອຸດໜູນພໍ່ແມ່ ກ່ອນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະກັນສັງຄົມ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

### 2.7.2. ມາດຕາ 43 ການຄິດໄລ່ເງິນອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນ ເປັນລາຍເດືອນ

ເງິນອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນທີ່ໄດ້ເສຍຊີວິດ ໃຫ້ຄິດໄລ່ ດັ່ງນີ້:

1). ຜົວ ຫຼື ເມຍ ໃຫ້ຄິດໄລ່ເທົ່າກັບ 30% ຂອງເງິນເດືອນປະກັນຕົນ, ເງິນບຳນານ ຫຼື ເງິນເສຍອົງຄະ ເດືອນສຸດທ້າຍ ຂອງຜູ້ເສຍຊີວິດ.

**ຕົວຢ່າງ:** ທ້າວ ຣ ມີເງິນເດືອນປະກັນຕົນ, ເງິນບຳນານ ຫຼື ເສຍອົງຄະເດືອນສຸດທ້າຍເທົ່າກັບ1.500.000 ກີບ.

ການຄິດໄລ່: 30% x 1.500.000 ກີບ = 450.000 ກີບ/ເດືອນ.

2). ລູກ ໃຫ້ຄິດໄລ່ເທົ່າກັບ 20% ຂອງເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍຂອງຜູ້ເສັຍຊີວິດ.

**ຕົວຢ່າງ:** ທ້າວ ຣ ມີລູກ 1 ຄົນ, ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 1 ຄົນ x 20% x 1.500.000 ກີບ = 300.000 ກີບ/ເດືອນ.

ຖ້າຫາກມີລູກຫຼາຍຄົນ, ເງິນອຸດໜູນລູກລວມທັງໝົດບໍ່ໃຫ້ເກີນ 60% ຂອງເງິນເດືອນປະກັນຕົນຂອງຜູ້ເສັຍຊີວິດ.

**ຕົວຢ່າງ:** ທ້າວ ຣ ມີລູກ 4 ຄົນ, ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 4 ຄົນ x 60% x 1.500.000 ກີບ = 900.000 ກີບ/ເດືອນ.

3). ພໍ່ ຫຼື ແມ່ ໃຫ້ຄິດໄລ່ 30% ຂອງເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະ ເດືອນສຸດທ້າຍຂອງຜູ້ເສັຍຊີວິດ.

**ຕົວຢ່າງ:** ທ້າວ ຣ ມີ ພໍ່ ຫຼື ແມ່, ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ.

ການຄິດໄລ່: 30% x 1.500.000 ກີບ = 450.000 ກີບ/ເດືອນ.

ຖ້າຫາກ ພໍ່ ແລະ ແມ່ ລ້ວນແຕ່ໄດ້ຮັບເງິນອຸດໜູນ ລວມທັງໝົດບໍ່ໃຫ້ເກີນ 50% ຂອງເງິນເດືອນປະກັນຕົນຂອງຜູ້ເສັຍຊີວິດ.

**ຕົວຢ່າງ:** ທ້າວ ຣ ມີ ພໍ່ ແລະ ແມ່, ມີເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍເທົ່າກັບ 1.500.000 ກີບ.

ການຄິດໄລ່: 2 ຄົນ x ( 50% ÷ 2 = 25%) x 1.500.000 ກີບ = 750.000 ກີບ/ເດືອນ.

4). ເງິນອຸດໜູນໃຫ້ແກ່ ຜົວ ຫຼື ເມັຍ, ລູກ, ພໍ່ ຫຼື ແມ່ ຂອງຜູ້ປະກັນຕົນ ລວມທັງໝົດບໍ່ໃຫ້ເກີນ 80% ຂອງເງິນເດືອນປະກັນຕົນ, ເງິນບໍານານ ຫຼື ເສັຍອົງຄະເດືອນສຸດທ້າຍຂອງຜູ້ເສັຍຊີວິດ.

ໃນກໍລະນີ ເປົ້າໝາຍໃດໜຶ່ງຂ້າງເທິງນີ້ຫາກໄດ້ເສັຍຊີວິດ ກໍໃຫ້ດັດປັບເງິນອຸດໜູນຂອງເປົ້າໝາຍທີ່ຍັງເຫຼືອ ໃຫ້ຢູ່ໃນລະດັບເງິນອຸດໜູນຂອງຜູ້ກ່ຽວ ແຕ່ບໍ່ເກີນ 80% ຂອງເງິນເດືອນປະກັນຕົນ.

5). ພໍ່ ຫຼື ແມ່ ທີ່ລູກທັງໝົດໄດ້ເສັຍຊີວິດຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບເພື່ອປະເທດຊາດ ເຖິງວ່າບໍ່ໄດ້ປະກັນຕົນກໍຕາມ ກໍຈະໄດ້ຮັບການອຸດໜູນຕະຫຼອດຊີວິດ.

ກໍລະນີ ລູກທີ່ເສັຍຊີວິດທີ່ ມີຊັ້ນ-ຂັ້ນເງິນເດືອນ ໃຫ້ຖືເອົາຊັ້ນ-ຂັ້ນເງິນເດືອນນັ້ນ ເປັນເງິນເດືອນປະກັນຕົນ, ສ່ວນລູກທີ່ບໍ່ມີຊັ້ນ-ຂັ້ນເງິນເດືອນ ໃຫ້ຖືເອົາເງິນເດືອນລັດຖະບໍລິຫານຕໍ່າສຸດເປັນຕົວຕັ້ງ ໃນການຄິດໄລ່.

ສໍາລັບການຄິດໄລ່ເງິນອຸດໜູນ ພໍ່ ຫຼື ແມ່ ໃຫ້ປະຕິບັດຕາມ ຂໍ້ 3 ຂ້າງເທິງນີ້.

### 2.8. ມາດຕາ 44 ການອຸດໜູນວ່າງງານ

ການອຸດໜູນວ່າງງານ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນ ໃຫ້ຜູ້ປະກັນຕົນໃນເວລາວ່າງງານ ເປັນແຕ່ລະໄລຍະ.

### 2.8.1 ມາດຕາ 45 ເງື່ອນໄຂຮັບການອຸດໜູນວ່າງງານ

ເງື່ອນໄຂຮັບການອຸດໜູນວ່າງງານ ມີ ດັ່ງນີ້:

1. ເງື່ອນໄຂທີ່ໄດ້ຮັບການອຸດໜູນວ່າງງານ

1). ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 12 ເດືອນຂຶ້ນໄປ ໃນໄລຍະ 24 ເດືອນສຸດທ້າຍ;

2). ວ່າງງານຍ້ອນການລົ້ມລະລາຍຂອງຫົວໜ່ວຍແຮງງານ ຫຼື ການລະເມີດໃຫ້ອອກຈາກວຽກ;

3). ວ່າງງານ ຍ້ອນຄວາມຕ້ອງການຫຼຸດຈໍານວນແຮງງານ ເນື່ອງຈາກວິກິດການທາງດ້ານເສດຖະກິດທີ່ມີຜົນກະທົບຕໍ່ການຜະລິດຂອງຫົວໜ່ວຍແຮງງານ;

4). ວ່າງງານ ແຕ່ 30 ວັນຂຶ້ນໄປ ໂດຍມີການຢັ້ງຢືນຈາກຫົວໜ່ວຍແຮງງານ ທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ;

5). ມີສຸຂະພາບແຂງແຮງ ແລະ ສາມາດກັບເຂົ້າສູ່ຕະຫຼາດແຮງງານ;

6). ຜູ້ທີ່ໄດ້ຮັບການອຸດໜູນວ່າງງານມາກ່ອນ ຕ້ອງສະສົມເງິນສົມທົບສຳລັບການອຸດໜູນວ່າງງານຕື່ມອີກ 12 ເດືອນ ຂຶ້ນໄປ ຈຶ່ງສາມາດໄດ້ຮັບການອຸດໜູນວ່າງງານຄັ້ງໃໝ່.

2. ເງື່ອນໄຂທີ່ບໍ່ໄດ້ຮັບການອຸດໜູນວ່າງງານ

1). ເຮັດວຽກຕາມລະດູການ ຫຼື ເຮັດວຽກຕາມຜະລິດຕະພັນ;

2). ລະເມີດສັນຍາແຮງງານ ຫຼື ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ;

3). ສະໝັກໃຈລາອອກຈາກວຽກດ້ວຍເຫດຜົນຕ່າງໆ;

4). ເສຍກຳລັງແຮງງານ ຫຼື ເສຍອົງຄະ;

5). ໄລຍະພັກແລ້ງຂອງຄູໃນໂຮງຮຽນເອກະຊົນ;

6). ຜູ້ກຳລັງຮັບເງິນອຸດໜູນວ່າງງານ ທີ່ໄດ້ເຮັດວຽກໃໝ່ ຈະຖືກຕັດເງິນອຸດໜູນວ່າງງານ ທີ່ຍັງເຫຼືອ.

**2.8.2. ມາດຕາ 46 ການຄິດໄລ່ເງິນອຸດໜູນວ່າງງານ**

ເງິນອຸດໜູນວ່າງງານ ເທົ່າກັບ 60% ຂອງເງິນເດືອນສະເລັ່ຍ 6 ເດືອນສຸດທ້າຍກ່ອນການວ່າງງານ ຊຶ່ງການຄິດໄລ່ໃຫ້ປະຕິບັດຕາມໄລຍະຖອກເງິນສົມທົບ ດັ່ງນີ້:

| ໄລຍະຖອກເງິນສົມທົບ | ໄລຍະຮັບເງິນອຸດໜູນວ່າງງານ |
|---|---|
| 12-36 ເດືອນ | 3 ເດືອນ |
| 37-72 ເດືອນ | 6 ເດືອນ |
| 73-144 ເດືອນ | 9 ເດືອນ |
| 145 ເດືອນຂຶ້ນໄປ | 12 ເດືອນ ສູງສຸດ |

ການຈ່າຍເງິນອຸດໜູນວ່າງງານ ໃຫ້ຈ່າຍເປັນລາຍເດືອນ ຕາມແຕ່ລະໄລຍະຮັບເງິນອຸດໜູນ, ແຕ່ຈະຈ່າຍສະເພາະໄລຍະວ່າງງານເທົ່ານັ້ນ.

**ຕົວຢ່າງ:** ທ້າວ ລ ມີເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ ເທົ່າກັບ 1.500.000 ກີບ

ການຄິດໄລ່: 60% x 1.500.000 ກີບ = 900.000 ກີບ.

**2.8.3. ມາດຕາ 49 ການສິ້ນສຸດການຮັບອຸດໜູນວ່າງງານ**

ຜູ້ທີ່ກຳລັງຮັບການອຸດໜູນວ່າງງານ ຈະສິ້ນສຸດການໄດ້ຮັບເງິນອຸດໜູນໃນກໍລະນີ ດັ່ງນີ້:

1). ໝົດກຳນົດໄລຍະການຮັບອຸດໜູນວ່າງງານ;

2). ປະຕິເສດການຮັບວຽກໃໝ່ ໂດຍບໍ່ມີເຫດຜົນ;

3). ມີວຽກເຮັດງານທຳໃໝ່;

4). ໄດ້ເສຍຊີວິດ.

**2.9. ມາດຕາ 50 ການສະສົມເງິນສົມທົບ ແລະ ໄລຍະປະກັນຕົນ**

ຜູ້ປະກັນຕົນ ທີ່ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ໂດຍໄດ້ປ່ຽນບ່ອນເຮັດວຽກໃໝ່ ຫຼື ໄດ້ໂຈະການຈ່າຍເງິນສົມທົບຊົ່ວຄາວ ກໍສາມາດສືບຕໍ່ຖອກເງິນສົມທົບ ເພື່ອສະສົມເງິນສົມທົບອັນເກົ່າ ແລະ ອັນໃໝ່ໄວ້ ສຳລັບຜົນປະໂຫຍດໃນການໄດ້ຮັບການອຸດໜູນປະກັນສັງຄົມປະເພດຕ່າງໆ.

ຜູ້ປະກັນຕົນ ທີ່ສັງກັດໃນການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ ທີ່ໄດ້ສະສົມເງິນສົມທົບ, ປີການ ຫຼື ປີປະກັນຕົນ ທີ່ໄດ້ຍົກຍ້າຍໄປເຮັດວຽກຢູ່ບ່ອນໃໝ່ ໂດຍບໍ່ໄດ້ຮັບເງິນອຸດໜູນເທື່ອດຽວມາກ່ອນ ເມື່ອມີກະສຽນອາຍຸຄົບຕາມເງື່ອນໄຂ ກໍສາມາດສະເໜີຮັບອຸດໜູນບຳນານ ໂດຍໃຫ້ສະສົມປີການ ຫຼື ປີປະກັນຕົນ ດັ່ງນີ້:

1). ຜູ້ປະກັນຕົນ ທີ່ເປັນພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ຍົກຍ້າຍໄປເຮັດວຽກຢູ່ຫົວໜ່ວຍແຮງງານ ໃຫ້ບວກປີການ ຫຼື ປີປະກັນຕົນ ທັງ 2 ບ່ອນເຂົ້າກັນໃຫ້ຄົບ 15 ປີຂຶ້ນໄປ.

2). ຜູ້ປະກັນຕົນ ທີ່ເປັນຜູ້ອອກແຮງງານຢູ່ຫົວໜ່ວຍແຮງງານ ທີ່ຍົກຍ້າຍໄປເຮັດວຽກຢູ່ການຈັດຕັ້ງຂອງລັດ ໃຫ້ບວກປີການ ຫຼື ປີປະກັນຕົນ ທັງ 2 ບ່ອນເຂົ້າກັນໃຫ້ຄົບ 25 ປີຂຶ້ນໄປ.

3). ຜູ້ປະກັນຕົນ ທີ່ຍົກຍ້າຍໄປເຮັດວຽກຢູ່ການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ ທີ່ຄົບເງື່ອນໄຂຮັບການອຸດໜູນເສັຍຊີວິດ ຫຼື ບໍານານໃຫ້ບວກປີການ ຫຼື ປີປະກັນຕົນ ແລະ ເງິນສົມທົບເຂົ້າກັນ ເພື່ອຄິດໄລ່ການອຸດໜູນເສັຍຊີວິດ ຫຼື ການອຸດໜູນບໍານານ ຕາມລະບົບລັດຖະກອນ ຫຼື ລະບົບຜູ້ອອກແຮງງານໃນຫົວໜ່ວຍແຮງງານ.

4). ຜູ້ປະກັນຕົນ ທີ່ໄດ້ສະສົມປີການ ຫຼື ເງິນສົມທົບ ຢູ່ລະບົບໃດຫຼາຍກວ່າ ໂດຍມີການຢັ້ງຢືນຢ່າງຖືກຕ້ອງ ກໍສາມາດຄິດໄລ່ເງິນອຸດໜູນບໍານານຕາມລະບົບນັ້ນ, ຍົກເວັ້ນ ຜູ້ທີ່ໄດ້ປະລະໜ້າທີ່ ໄປສືບຕໍ່ເຮັດວຽກຢູ່ອີກລະບົບໜຶ່ງ ແມ່ນໃຫ້ຄິດໄລ່ເງິນອຸດໜູນບໍານານຕາມລະບົບທີ່ຜູ້ກ່ຽວສັງກັດສຸດທ້າຍ.

ສໍາລັບ ການຄິດໄລ່ການອຸດໜູນໄລຍະສັ້ນ ກໍໃຫ້ບວກປີການ ຫຼື ປີປະກັນຕົນເຂົ້າກັນ.

5). ຜູ້ປະກັນຕົນ ທີ່ມີກະສຽນອາຍຸບໍ່ຄົບ 10 ປີ, ແຕ່ມີປີການ ຫຼື ປີປະກັນຕົນ ຄົບຕາມເງື່ອນໄຂ, ຖ້າຫາກຜູ້ກ່ຽວໄດ້ສະໝັກໃຈອອກຈາກການຈັດຕັ້ງຂອງລັດ ຫຼື ຫົວໜ່ວຍແຮງງານ ໂດຍບໍ່ໄດ້ຮັບເງິນອຸດໜູນເທື່ອດຽວ ແລະ ບໍ່ສືບຕໍ່ຖອນເງິນສົມທົບ ກໍສາມາດລໍຖ້າ ເພື່ອຮັບການອຸດໜູນບໍານານ ເມື່ອກະສຽນອາຍຸຂອງຜູ້ກ່ຽວຄົບຕາມເງື່ອນໄຂທີ່ໄດ້ກໍານົດໄວ້.

6). ຜູ້ປະກັນຕົນທີ່ໄດ້ເຂົ້າລະບອບປະກັນສັງຄົມ ຕາມດໍາລັດ 70/ນຍ ແລະ 207/ນຍ ມາກ່ອນແລ້ວ ໃຫ້ບວກປີການ ຫຼື ປີປະກັນຕົນ ເຂົ້າກັນ ເພື່ອພິຈາລະນາຮັບການອຸດໜູນບໍານານ ຢູ່ລະບົບໃດໜຶ່ງ ທີ່ມີປີການ ຫຼື ປີປະກັນຕົນຫຼາຍກວ່າ.

ໃນກໍລະນີ ຜູ້ປະກັນຕົນທີ່ໄດ້ຮັບການອຸດໜູນບໍານານຢູ່ 2 ລະບົບ ມາກ່ອນ ແມ່ນບໍ່ໃຫ້ມີການປ່ຽນແປງ, ສ່ວນຜູ້ທີ່ສະເໜີຮັບການອຸດໜູນບໍານານທັງ 2 ລະບົບ ພາຍຫຼັງໄດ້ປະຕິບັດກົດໝາຍ ວ່າດ້ວຍການປະກັນສັງຄົມ ຈະໄດ້ຮັບການພິຈາລະນາ ໃຫ້ຮັບການອຸດໜູນບໍານານ ຕາມລະບົບໃດໜຶ່ງ ທີ່ກ່ຽວຂ້ອງເທົ່ານັ້ນ.

7). ການຄິດໄລ່ເງິນອຸດໜູນບໍານານ ຫຼື ເງິນອຸດໜູນອື່ນ ໃຫ້ເອົາເງິນເດືອນປະກັນຕົນເດືອນສຸດທ້າຍຂອງພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ ຫຼື ເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍ ຂອງຜູ້ອອກແຮງງານໃນຫົວໜ່ວຍແຮງງານ ເປັນຕົວຕັ້ງ ໂດຍມີການຄິດໄລ່ສະເພາະ ເປັນລາຍລະອຽດຕື່ມ.

ສໍາລັບ ຜູ້ປະກັນຕົນ ທີ່ໄປສຶກສາຮໍ່າຮຽນໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ເອົາເງິນເດືອນປະກັນຕົນເດືອນສຸດທ້າຍ ຫຼື ເງິນເດືອນປະກັນຕົນສະເລັ່ຍ 6 ເດືອນສຸດທ້າຍຂອງຜູ້ກ່ຽວ ກ່ອນໄປຮຽນ ເປັນຕົວຕັ້ງໃນການຄິດໄລ່.

## III. ອັດຕາເງິນສົມທົບ ແລະການຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ

### 1. ອັດຕາເງິນສົມທົບ

#### 1.1. ມາດຕາ 55 ເງິນສົມທົບຂອງລັດຖະບານ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ

ເງິນສົມທົບຂອງລັດຖະບານ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ໄດ້ກໍານົດ ດັ່ງນີ້:

1. ລັດຖະບານ ປະກອບເງິນສົມທົບເທົ່າກັບ 8,5% ຂອງເງິນເດືອນທັງໝົດ ແຕ່ລະເດືອນ ເພື່ອສົມທົບເຂົ້າໃນການອຸດໜູນປະກັນສັງຄົມ ສໍາລັບພະນັກງານ, ລັດຖະກອນ, ທະຫານ ແລະ ຕໍາຫຼວດ.

2. ພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ ປະກອບເງິນສົມທົບເທົ່າກັບ 8% ຂອງເງິນເດືອນທັງໝົດ ແຕ່ລະເດືອນ.

#### 1.2. ມາດຕາ 56 ເງິນສົມທົບຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໃນຫົວໜ່ວຍແຮງງານ

ເງິນສົມທົບຂອງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ໄດ້ກໍານົດ ດັ່ງນີ້:

1. ຜູ້ໃຊ້ແຮງງານທີ່ເປັນຫົວໜ່ວຍແຮງງານ ປະກອບເງິນສົມທົບເທົ່າກັບ 6% ຂອງເງິນເດືອນ ຫຼື ຄ່າແຮງງານເປັນແຕ່ລະເດືອນ ເພື່ອສົມທົບເຂົ້າໃນການອຸດໜູນປະກັນສັງຄົມ ສໍາລັບຜູ້ອອກແຮງງານໃນຫົວໜ່ວຍແຮງງານ.

2. ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ປະກອບເງິນສົມທົບ ເທົ່າກັບ 5,5% ຂອງເງິນເດືອນ ຫຼື ຄ່າແຮງງານແຕ່ລະເດືອນ;

3. ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ປະກອບເງິນສົມທົບ ເທົ່າກັບ 9% ຂອງເງິນປະກັນຕົນ ໃນລະຫວ່າງຄ່າແຮງງານຂັ້ນຕ່ຳ ແລະ ເພດານເງິນເດືອນປະກັນຕົນສູງສຸດ ທີ່ລັດປະກາດໃຊ້ໃນແຕ່ລະໄລຍະ.

**1.3. ເງິນສົມທົບປິ່ນປົວສຸຂະພາບຂອງພະນັກງານບຳນານ ແລະ ຜູ້ເສຍອົງຄະ**

ເງິນສົມທົບປິ່ນປົວສຸຂະພາບຂອງພະນັກງານບຳນານ, ຜູ້ເສຍອົງຄະ, ຜູ້ດູແລຜູ້ເສຍອົງຄະປະເພດ 1 ຫຼື ປະເພດພິເສດຢູ່ສູນເສຍອົງຄະ ແລະ ສະມາຊິກຄອບຄົວ (ຜົວ ຫຼື ເມັຍ,ລູກ, ພໍ່ ຫຼື ແມ່) ປະກອບເງິນສົມທົບເທົ່າກັບເຄິ່ງໜຶ່ງຂອງສັດສ່ວນເງິນອຸດໜູນປິ່ນປົວສຸຂະພາບ ໃນແຕ່ລະໄລຍະ.

**2. ວິທີການຖອກເງິນສົມທົບ**

**2.1. ການຖອກເງິນສົມທົບຂອງລັດຖະບານ, ພະນັກງານ-ລັດຖະກອນ**

2.1.1. ບັນດາກະຊວງ, ອົງການອ້ອມຂ້າງສູນກາງ, ແຂວງ ແລະ ນະຄອນຫຼວງ ຕ້ອງຂຶ້ນບັນຊີເງິນເດືອນທັງໝົດຂອງພະນັກງານ - ລັດຖະກອນ ໂດຍສະແດງໃຫ້ເຫັນເງິນເດືອນພື້ນຖານ ຕາມຊັ້ນ-ຂັ້ນ, ເງິນອຸດໜູນປີການ, ເງິນອຸດໜູນຕຳແໜ່ງ ແລະ ເງິນອຸດໜູນວິຊາການອື່ນ ເພື່ອຄິດໄລ່ເງິນສົມທົບ 8% ແລະ 8,5% ເປັນລາຍເດືອນ ແລ້ວໃຫ້ນຳສົ່ງເຖິງກອງທຶນປະກັນສັງຄົມແຫ່ງຊາດ ບໍ່ໃຫ້ເກີນວັນທີ 15 ຂອງເດືອນຖັດໄປ.

ສຳລັບບັນຊີສັງລວມເງິນສົມທົບ 8 % ແລະ 8,5% ຂອງທະຫານ ແລະ ຕຳຫຼວດໃຫ້ສະຫຼຸບລາຍງານເຖິງກອງທຶນປະກັນສັງຄົມແຫ່ງຊາດ ເປັນແຕ່ລະໄລຍະ.

2.1.2. ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ສັງລວມແຜນງົບປະມານຈາກເງິນສົມທົບ 8% ແລະ 8,5% ໂດຍການຮັບຮອງຂອງຄະນະສະພາບໍລິຫານກອງທຶນປະກັນສັງຄົມແຫ່ງຊາດ ແລ້ວສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອສະເໜີກະຊວງການເງິນສັງລວມເຂົ້າແຜນງົບປະມານ ແລະ ສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ພິຈາລະນາຕົກລົງ ໃນແຕ່ລະສົກປີງົບປະມານ.

ແຜນງົບປະມານຈາກເງິນສົມທົບ 8% ແລະ 8,5% ທີ່ໄດ້ຖືກຮັບຮອງ ແມ່ນກະຊວງການເງິນຫັກລວມສູນຢູ່ຄັງເງິນແຫ່ງຊາດ ແລະ ໂອນເຂົ້າບັນຊີເງິນຝາກຂອງກອງທຶນປະກັນສັງຄົມແຫ່ງຊາດ ເປັນລາຍເດືອນ.

ສຳລັບງົບປະມານເງິນສົມທົບ 8% ຢູ່ຂັ້ນທ້ອງຖິ່ນ ກໍສາມາດຫັກລວມສູນຢູ່ຄັງເງິນແຂວງ ແລະ ນະຄອນຫຼວງແລ້ວໃຫ້ໂອນເຂົ້າບັນຊີເງິນຝາກຂອງກອງທຶນປະກັນສັງຄົມແຫ່ງຊາດ ເປັນລາຍເດືອນ.

**2.2. ການຖອກເງິນສົມທົບຂອງຜູ້ໃຊ້ແຮງງານທີ່ເປັນຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ**

ຫົວໜ່ວຍແຮງງານ ຕ້ອງສ້າງບັນຊີຈຳນວນຜູ້ອອກແຮງງານ, ບັນຊີເງິນເດືອນລາຍລະອຽດຂອງຜູ້ອອກແຮງງານທັງໝົດ, ບັນຊີເງິນສົມທົບ 6% ຂອງເງິນເດືອນຜູ້ອອກແຮງງານທັງໝົດໃນນາມຜູ້ໃຊ້ ແຮງງານ ແລະ ບັນຊີເງິນສົມທົບ 5,5% ຂອງເງິນເດືອນຜູ້ອອກແຮງງານ ແຕ່ລະຄົນເປັນລາຍເດືອນ ໂດຍໃຫ້ໂອນເຂົ້າບັນຊີເງິນຝາກຂອງກອງທຶນປະກັນສັງຄົມແຫ່ງຊາດ.

ລະດັບເງິນສົມທົບໃຫ້ຖືເອົາເງິນເດືອນ ຫຼື ຄ່າແຮງງານຂອງຜູ້ປະກັນຕົນເປັນຕົວຕັ້ງໃນການຄິດໄລ່, ແຕ່ຈະໄດ້ກຳນົດເພດານເງິນເດືອນປະກັນຕົນສູງສຸດໄວ້ເປັນແຕ່ລະໄລຍະ.

ຫົວໜ່ວຍແຮງງານ ທີ່ມີການຄ້າງຈ່າຍເງິນສົມທົບ ທີ່ພາໃຫ້ຜູ້ປະກັນຕົນເກີດມີການເສຍສິດໃນການໄດ້ຮັບການອຸດໜູນປະກັນສັງຄົມປະເພດຕ່າງໆ ຫົວໜ່ວຍແຮງງານທີ່ກ່ຽວຂ້ອງ ຕ້ອງໄດ້ຮັບຜິດຊອບໃນການເສຍສິດນັ້ນ ແລະ ໃຫ້ສືບຕໍ່ຈ່າຍເງິນສົມທົບຕາມລະບຽບການ.

ຫົວໜ່ວຍແຮງງານ ທີ່ຢຸດຈ່າຍເງິນສົມທົບ ຕ້ອງມີເງື່ອນໄຂ ຄື: ຢຸດກິດຈະການ, ການລົ້ມລະລາຍ ຫຼື ໄດ້ຮັບຜົນກະທົບຈາກໄພພິບັດ ໂດຍມີການຢັ້ງຢືນ ຢ່າງຖືກຕ້ອງຕາມລະບຽບກົດໝາຍ.

**2.3. ການຖອກເງິນສົມທົບ ເພື່ອປິ່ນປົວສຸຂະພາບຂອງພະນັກງານບຳນານ ແລະ ຜູ້ເສຍອົງຄະ**

ການຖອກເງິນສົມທົບ ເພື່ອປິ່ນປົວສຸຂະພາບຂອງພະນັກງານບຳນານ, ຜູ້ເສຍອົງຄະ, ຜູ້ດູແລຜູ້ເສຍອົງຄະ ແລະ ຜູ້ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ທີ່ຫັກຈາກເງິນອຸດໜູນທີ່ກ່ຽວຂ້ອງຂອງພວກກ່ຽວ ໃຫ້ຫັກໂດຍກົງເຂົ້າບັນຊີກອງທຶນອຸດໜູນປິ່ນປົວສຸຂະພາບ ເປັນລາຍເດືອນ, ງວດ ຫຼື ສົກປີ.

**2.4. ການຖອກເງິນສົມທົບຂອງຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ**

ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ປະກອບເງິນສົມທົບ ເທົ່າກັບ 9% ເປັນລາຍເດືອນ ຫຼື ງວດ ຕາມຄ່າແຮງງານຂັ້ນຕໍ່າ ທີ່ລັດປະກາດໃຊ້ ເປັນຈຸດເລີ່ມ ແລະ ມີການກຳນົດເພດານເງິນເດືອນປະກັນຕົນສູງສຸດ ໃນແຕ່ລະໄລຍະ ໂດຍໃຫ້ຖອກເຂົ້າບັນຊີເງິນຝາກຂອງກອງທຶນປະກັນສັງຄົມແຫ່ງຊາດ.

ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ທີ່ຈະຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຕ້ອງມີກະສຽນອາຍຸ ແຕ່ 18 ປີ ຫາ 60 ປີ.

**2.5. ການເກັບ ແລະ ສະສົມເງິນສົມທົບ**

ເງິນສົມທົບທັງໝົດຂອງລັດຖະບານໃນອັດຕາ 8,5% ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ 8%, ຜູ້ໃຊ້ແຮງງານທີ່ເປັນຫົວໜ່ວຍແຮງງານ 6% ແລະ ຜູ້ອອກແຮງງານ 5,5%, ເງິນສົມທົບ ຂອງຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ໃນອັດຕາເທົ່າກັບ 9% ຂອງເງິນເດືອນປະກັນຕົນ ໃນລະຫວ່າງຄ່າແຮງງານຂັ້ນຕໍ່າ ແລະ ເພດານເງິນເດືອນປະກັນຕົນສູງສຸດ ຈະໄດ້ເກັບ ແລະ ສະສົມໄວ້ໃນກອງທຶນປະກັນສັງຄົມແຫ່ງຊາດ ແລະ ຈັດແບ່ງເຂົ້າໃນແຕ່ລະກອງທຶນການອຸດໜູນປະກັນສັງຄົມ ຕາມອັດຕາສ່ວນ ໃນຕາຕະລາງ ດັ່ງນີ້:

| ກອງທຶນອຸດໜູນປະກັນສັງຄົມ | ອັດຕາສ່ວນຂອງລະບົບບັນຊີເງິນສົມທົບ | | |
|---|---|---|---|
| | ລັດຖະບານ ແລະ ລັດຖະກອນ, ທະຫານ, ຕຳຫຼວດ | ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ | ຜູ້ປະກອບອາຊີບສ່ວນບຸກຄົນ |
| ກອງທຶນອຸດໜູນການປິ່ນປົວສຸຂະພາບ | 1,5 | 1,5 | 1,5 |
| ກອງທຶນອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ | 0,5 | 0,5 | - |
| ກອງທຶນອຸດໜູນໄລຍະສັ້ນສຳລັບການອອກລູກ ຫຼື ຫຼຸລູກ, ປ່ວຍການ ແລະ ເສຍຊີວິດ | 2,5 | 2,5 | 2,5 |
| ກອງທຶນອຸດໜູນໄລຍະຍາວ ສຳລັບການອຸດໜູນບຳນານ, ເສຍອົງຄະ ແລະ ສະມາຊິກຄອບຄົວ | 12 | 5 | 5 |
| ກອງທຶນອຸດໜູນວ່າງງານ | | 2 | - |
| ລວມ: | 16,5 | 11,5 | 9 |

## IV. ການຮັບອຸດໜູນປະກັນສັງຄົມ

**1. ມາດຕາ 64 ການຂຶ້ນທະບຽນປະກັນສັງຄົມ**

ການຂຶ້ນທະບຽນປະກັນສັງຄົມຂອງກຸ່ມເປົ້າໝາຍຕ່າງໆ ໃຫ້ປະຕິບັດ ດັ່ງນີ້:

1). ບັນດາກະຊວງ, ອົງການອ້ອມຂ້າງສູນກາງ, ແຂວງ, ນະຄອນຫຼວງ ແລະ ຫົວໜ່ວຍແຮງງານ ຕ້ອງຂຶ້ນບັນຊີພະນັກງານ-ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ສະມາຊິກຄອບຄົວຂອງພວກກ່ຽວ ເປັນແຕ່ລະໄລຍະ ຕາມແບບພິມທີ່ໄດ້ກຳນົດໄວ້;

2). ບັນຊີພະນັກງານ - ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ສະມາຊິກຄອບຄົວຂອງພວກກ່ຽວ ຕ້ອງສະເໜີຂຶ້ນທະບຽນປະກັນສັງຄົມນຳກອງທຶນປະກັນສັງຄົມແຫ່ງຊາດ.

ສຳລັບບັນຊີພະນັກງານ-ລັດຖະກອນ ຂອງແຂວງ ແລະ ນະຄອນຫຼວງ ໃຫ້ສະເໜີຂຶ້ນທະບຽນປະກັນສັງຄົມທີ່ສູນບໍລິການປະກັນສັງຄົມແຂວງ ແລະ ນະຄອນຫຼວງ.

3). ການແຈ້ງຂໍ້ມູນ ຂອງຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ

- ຜູ້ປະກັນຕົນ ຕ້ອງແຈ້ງຂໍ້ມູນເພີ່ມ ຫຼື ຫຼຸດຂອງສະມາຊິກຄອບຄົວ ທີ່ເປັນ ຜົວ, ເມັຍ, ລູກ ແລະ ພໍ່ແມ່ ໂດຍໃຫ້ມີການຢັ້ງຢືນ ທີ່ຖືກຕ້ອງ ເພື່ອສະເໜີຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ເປັນແຕ່ລະໄລຍະ ເພື່ອໃຫ້ໄດ້ຮັບສິດໃນການອຸດໜູນປະກັນສັງຄົມ ພາຍຫຼັງກຳນົດເວລາ 3 ວັນ.

- ຜູ້ປະກັນຕົນ ທີ່ໄດ້ຮັບການອຸດໜູນໄລຍະສັ້ນ ຫຼື ໄລຍະຍາວໃດໜຶ່ງ ທີ່ໄປຢູ່ຕ່າງປະເທດ ເກີນ 3 ເດືອນຂຶ້ນໄປ ຕ້ອງໄດ້ແຈ້ງສະພາບຂອງຕົນເອງ ຕໍ່ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ພາຍໃນກຳນົດເວລາ 3 ເດືອນຕໍ່ຄັ້ງ ໂດຍຜ່ານສື່ອີເລັກໂທຣນິກຕ່າງໆ, ທາງໂທລະສັບ ຫຼື ເວັບໄຊ໌ ຂອງ ກປຊ ເພື່ອຢັ້ງຢືນສະຖານະພາບຂອງຕົນເອງ ສຳລັບການຮັບເງິນອຸດໜູນປະກັນສັງຄົມທີ່ກ່ຽວຂ້ອງ.

ໃນກໍລະນີ ສະຖານະພາບຂອງຜູ້ຮັບການອຸດໜູນສະມາຊິກຄອບຄົວຫາກມີວຽກເຮັດງານທຳ, ມີລາຍໄດ້, ແຕ່ງດອງໃໝ່ ຫຼື ເສຍຊີວິດ ກໍຈະຖືກຢຸດຈ່າຍເງິນອຸດໜູນປະກັນສັງຄົມທີ່ກ່ຽວຂ້ອງ.

- ຜູ້ປະກັນຕົນ ທີ່ເປັນຜູ້ອອກແຮງງານຕ່າງປະເທດ ທີ່ໄດ້ຮັບການອຸດໜູນປະກັນສັງຄົມໄລຍະສັ້ນ ຫຼື ໄລຍະຍາວໃດໜຶ່ງ ທີ່ກັບຄືນປະເທດຂອງຕົນ ພາຍຫຼັງການສິ້ນສຸດສັນຍາແຮງງານ ຕ້ອງແຈ້ງສະຖານະພາບຂອງຕົນເອງ ຕໍ່ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ພາຍໃນກຳນົດເວລາ 3 ເດືອນຕໍ່ຄັ້ງ ໂດຍຜ່ານສື່ອີເລັກໂທຣນິກຕ່າງໆ, ທາງໂທລະສັບ ຫຼື ເວັບໄຊ໌ ຂອງ ກປຊ ເພື່ອສືບຕໍ່ຮັບເງິນອຸດໜູນທີ່ກ່ຽວຂ້ອງ ໂດຍຜ່ານບັນຊີຂອງຕົນໃນລະບົບທະນາຄານທຸລະກິດ ຢູ່ ສປປ ລາວ.

## 2. ມາດຕາ 67 ການຮ້ອງຂໍຮັບອຸດໜູນປະກັນສັງຄົມ

### 2.1. ການຮ້ອງຂໍການອຸດໜູນປະກັນສັງຄົມ ໄລຍະຍາວ ສຳລັບພະນັກງານ-ລັດຖະກອນ

ການຮ້ອງຂໍການອຸດໜູນປະກັນສັງຄົມ ໄລຍະຍາວ ເຊັ່ນ: ການອຸດໜູນບຳນານ, ເສຍອົງຄະ ແລະ ສະມາຊິກຄອບຄົວ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຍື່ນຄຳຮ້ອງ ແລະ ເອກະສານປະກອບ ເຖິງພະແນກແຮງງານ ແລະ ສະຫວັດດີການສັງຄົມ ສຳລັບຂັ້ນທ້ອງຖິ່ນ ຫຼື ກົມປະກັນສັງຄົມ ສຳລັບບັນດາກະຊວງ, ອົງການອ້ອມຂ້າງສູນກາງ ໃຫ້ສຳເລັດພາຍໃນ 60 ວັນລັດຖະການ ເພື່ອພິຈາລະນາຮັບການອຸດໜູນປະກັນສັງຄົມ ທີ່ກ່ຽວຂ້ອງ ໃຫ້ສຳເລັດ ພາຍໃນ 30 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ, ເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ສຳລັບ ການອຸດໜູນເສຍອົງຄະ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ສະເໜີ-ເຖິງກົມປະກັນສັງຄົມ ເພື່ອຄົ້ນຄ້ວາ ແລະ ກວດກາເງື່ອນໄຂໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ ແລ້ວຈຶ່ງສະເໜີລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕົກລົງອະນຸມັດ.

ການຮ້ອງຂໍ ແລະ ປະກອບເອກະສານ ໃຫ້ປະຕິບັດ ດັ່ງນີ້:

1). ການປະກອບ ເອກະສານຮັບອຸດໜູນບຳນານ

- ໜັງສືສະເໜີຈາກກົມຈັດຕັ້ງ-ພະນັກງານ ຂອງກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ;
- ແຈ້ງການຂອງກະຊວງພາຍໃນກ່ຽວກັບການເຫັນດີໃຫ້ຮັບອຸດໜູນບຳນານ;
- ຂໍ້ຕົກລົງຂອງກະຊວງ ແລະ ອົງການ ທີ່ກ່ຽວຂ້ອງວ່າດ້ວຍການອະນຸມັດຮັບບຳນານ;
- ຊີວະປະຫວັດລັດຖະກອນ;
- ຊີວະປະຫວັດກ່ອນພັກຮັບບຳນານ;
- ໃບຢຸດຈ່າຍເງິນເດືອນ;
- ບັນຊີພະນັກງານຮັບບຳນານໃໝ່.

2). ການປະກອບເອກະສານຮັບອຸດໜູນເສຍອົງຄະ

- ໜັງສືສະເໜີຈາກກົມຈັດຕັ້ງ-ພະນັກງານ ຂອງກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ;
- ໜັງສືຢັ້ງຢືນກ່ຽວກັບການເກີດອຸປະຕິເຫດແຮງງານ, ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ;
- ໜັງສືຢັ້ງຢືນຂອງຄະນະຮັບຜິດຊອບຕີລາຄາແບ່ງຂັ້ນຂາດສະມັດຕະພາບແຮງງານ-ພິການ ຫຼື ເສຍອົງຄະ ກ່ຽວກັບການຕີລາຄາປະເພດ ແລະ ລະດັບການເສຍອົງຄະ ຂອງຜູ້ປະກັນຕົນ;
- ໜັງສືຢັ້ງຢືນຂອງສະພາການແພດ;
- ໜັງສືຢັ້ງຢືນຊັ້ນ-ຂັ້ນເງິນເດືອນຂອງຜູ້ປະກັນຕົນ;

- ບັນຊີລະອຽດເງິນເດືອນທັງໝົດຂອງຜູ້ກ່ຽວ;
- ບັນຊີແຈ້ງເພີ່ມພະນັກງານຮັບອຸດໜູນເສັຍອົງຄະໃໝ່.

3). ການປະກອບເອກະສານຮັບອຸດໜູນສະມາຊິກຄອບຄົວ

- ໜັງສືສະເໜີຈາກກົມຈັດຕັ້ງ-ພະນັກງານ ຂອງກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ;
- ໜັງສືຢັ້ງຢືນກ່ຽວກັບການເສັຍຊີວິດຂອງຜູ້ປະກັນຕົນ;
- ໜັງສືຢັ້ງຢືນກ່ຽວກັບເງື່ອນໄຂຂອງສະມາຊິກຄອບຄົວ ຂອງຜູ້ປະກັນຕົນ;
- ໜັງສືຢັ້ງຢືນຊັ້ນ-ຂັ້ນເງິນເດືອນ ຂອງຜູ້ປະກັນຕົນ;
- ບັນຊີລະອຽດເງິນເດືອນທັງໝົດຂອງຜູ້ປະກັນຕົນ.

## 2.2. ການຮ້ອງຂໍການອຸດໜູນປະກັນສັງຄົມໄລຍະຍາວຂອງຜູ້ອອກແຮງງານໃນຫົວໜ່ວຍແຮງງານ

ການຮ້ອງຂໍການອຸດໜູນປະກັນສັງຄົມ ໄລຍະຍາວ ສໍາລັບຜູ້ອອກແຮງງານ ໃນຫົວໜ່ວຍແຮງງານ ໃຫ້ຜູ້ໃຊ້ແຮງງານ ຍື່ນຄໍາຮ້ອງ ແລະ ເອກະສານປະກອບເຖິງສູນບໍລິການກອງທຶນປະກັນສັງຄົມແຂວງ-ນະຄອນຫຼວງ ເພື່ອສະເໜີພະແນກແຮງງານ ແລະ ສະຫວັດດີການສັງຄົມ ຫຼື ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ພາຍໃນ 90 ວັນລັດຖະການ ເພື່ອສະເໜີກົມປະກັນສັງຄົມຄົ້ນຄ້ວາພິຈາລະນາຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ແລ້ວຈຶ່ງສະເໜີລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຕົກລົງອະນຸມັດ ພາຍໃນ 30 ວັນລັດຖະການ.

ການຮ້ອງຂໍການອຸດໜູນປະກັນສັງຄົມ ທີ່ມີຄວາມຊັກຊ້າ ດ້ວຍເຫດຜົນອັນຈໍາເປັນ ກໍສາມາດພິຈາລະນາຕາມພາຍຫຼັງເປັນແຕ່ລະກໍລະນີສະເພາະ ໂດຍໃຫ້ຈ່າຍການອຸດໜູນທີ່ກ່ຽວຂ້ອງຢ້ອນຫຼັງ ນັບແຕ່ເດືອນທີ່ໄດ້ອະນຸມັດ ເປັນຕົ້ນມາ.

ສໍາລັບ ຜູ້ປະກັນຕົນ ທີ່ເປັນຜູ້ອອກແຮງງານໃນຫົວໜ່ວຍແຮງງານ ທີ່ສະເໜີຂໍການອຸດໜູນໄລຍະຍາວຊັກຊ້າເກີນ 6 ເດືອນຂຶ້ນໄປ ຈະໄດ້ຮັບການພິຈາລະນາ ນັບແຕ່ວັນຮ້ອງຂໍເປັນຕົ້ນໄປ.

ການຮ້ອງຂໍການອຸດໜູນປະກັນສັງຄົມໄລຍະຍາວ ສໍາລັບຜູ້ອອກແຮງງານ ໃຫ້ປະກອບເອກະສານທີ່ກ່ຽວຂ້ອງເປັນລາຍລັກອັກສອນ.

## 2.3. ການພິຈາລະນາເບີກຈ່າຍເງິນອຸດໜູນປະກັນສັງຄົມ

ເອກະສານຮັບການອຸດໜູນປະກັນສັງຄົມໄລຍະຍາວ ຂອງຜູ້ປະກັນຕົນ ທີ່ໄດ້ຮັບການອະນຸມັດຢູ່ຂັ້ນທ້ອງຖິ່ນໃຫ້ນໍາສົ່ງເຖິງສູນບໍລິການກອງທຶນປະກັນສັງຄົມ ແຂວງ-ນະຄອນຫຼວງ, ສ່ວນຢູ່ຂັ້ນສູນກາງໃຫ້ນໍາສົ່ງເຖິງຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ເພື່ອເບີກຈ່າຍເງິນອຸດໜູນຕ່າງໆ ທີ່ກ່ຽວຂ້ອງ.

## 2.4. ການຮ້ອງຂໍຮັບອຸດໜູນປະກັນສັງຄົມໄລຍະສັ້ນ

ການຮ້ອງຂໍການອຸດໜູນປະກັນສັງຄົມໄລຍະສັ້ນ ເຊັ່ນ: ເສັຍຊີວິດ, ອອກລູກ ຫຼື ຫຼຸລູກ ແລະ ປ່ວຍການ ລວມທັງການອຸດໜູນເທື່ອດຽວ ແລະ ວ່າງງານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຍື່ນຄໍາຮ້ອງ ແລະ ເອກະສານປະກອບຕໍ່ສູນບໍລິການກອງທຶນປະກັນສັງຄົມແຂວງ-ນະຄອນຫຼວງ ສໍາລັບຢູ່ທ້ອງຖິ່ນ ຫຼື ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ສໍາລັບຢູ່ສູນກາງ ໃຫ້ສໍາເລັດພາຍໃນ 60 ວັນລັດຖະການ ແລະ ຕ້ອງພິຈາລະນາການອຸດໜູນປະກັນສັງຄົມ ທີ່ກ່ຽວຂ້ອງ ໃຫ້ສໍາເລັດພາຍໃນ 30 ວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງ, ເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີ ມີຄວາມຈໍາເປັນ ກໍສາມາດພິຈາລະນາຕາມພາຍຫຼັງ ເປັນກໍລະນີສະເພາະ ໂດຍບໍ່ໃຫ້ຈ່າຍເງິນອຸດໜູນອື່ນຊໍ້າຊ້ອນກັນ.

ການປະກອບເອກະສານຮັບການອຸດໜູນປະກັນສັງຄົມໄລຍະສັ້ນ ມີ ດັ່ງນີ້:

- ໜັງສືສະເໜີຈາກກົມຈັດຕັ້ງ-ພະນັກງານ ຂອງກະຊວງ, ອົງການທີ່ກ່ຽວຂ້ອງ ຫຼື ຫົວໜ່ວຍແຮງງານ;
- ໜັງສືຢັ້ງຢືນ ແລະ ຂໍ້ຕົກລົງກ່ຽວກັບການເສັຍຊີວິດ, ປ່ວຍການ, ເສັຍກໍາລັງແຮງງານຊົ່ວຄາວ ແລະ ການອອກລູກ ຫຼື ຫຼຸລູກ ລວມທັງການອຸດໜູນເທື່ອດຽວ ແລະ ວ່າງງານ;
- ໜັງສືຢັ້ງຢືນບັນຊີເງິນເດືອນທັງໝົດຂອງຜູ້ປະກັນຕົນ.

## V. ບົດບັນຍັດສຸດທ້າຍ

### 1. ການຈັດຕັ້ງປະຕິບັດ

1.1. ມອບໃຫ້ກົມປະກັນສັງຄົມ, ກອງທຶນປະກັນສັງຄົມແຫ່ງຊາດ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫຼວງ, ຫ້ອງການກອງທຶນປະກັນສັງຄົມ ຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດຄຳແນະນຳເພີ່ມເຕີມສະບັບນີ້ ໃຫ້ມີປະສິດທິຜົນ.

1.2. ກົມຈັດຕັ້ງ-ພະນັກງານ ຂອງບັນດາກະຊວງ ແລະ ອົງການອ້ອມຂ້າງສູນກາງ, ກົມງົບປະມານ ແລະ ຄັງເງິນແຫ່ງຊາດຂອງກະຊວງການເງິນ, ຄະນະຈັດຕັ້ງແຂວງ ແລະ ນະຄອນຫຼວງ, ກອງທຶນປະກັນສຸຂະພາບແຫ່ງຊາດ, ໂຮງໝໍ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ຜູ້ເສັຍອົງຄະ, ຫົວໜ່ວຍແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບສ່ວນບຸກຄົນ ມີໜ້າທີ່ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

### 2. ຜົນສັກສິດ

ຄຳແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ 1 ສິງຫາ 2015 ເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳສະບັບເລກທີ 2434/ຮສສ, ລົງວັນທີ 29 ກໍລະກົດ 2014.

**ລັດຖະມົນຕີວ່າການ**

ອ່ອນຈັນ ທຳມະວົງ